ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 014 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍການກວດສອບອິດສະລະ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 152/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການກວດສອບອິດສະລະ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 10/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການກວດສອບອິດສະລະ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 152 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ
# ການກວດສອບອິດສະລະ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການກວດສອບອິດສະລະ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມຄັ້ງວັນທີ 10 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການກວດສອບອິດສະລະ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ　　　　　　　　　　　　　　　　　　　　　ເລກທີ 73 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍການກວດສອບອິດສະລະ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານກວດສອບອິດສະລະ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ຖືກຕ້ອງ, ໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການ ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງລັດ, ລວມໝູ່, ສັງຄົມ, ນັກກວດສອບ, ເປົ້າໝາຍຖືກກວດສອບ, ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານການຄຸ້ມຄອງການເງິນ, ສົ່ງເສີມ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 (ປັບປຸງ) ການກວດສອບອິດສະລະ**

ການກວດສອບອິດສະລະ ແມ່ນ ຂະບວນການດຳເນີນການກວດສອບເອກະສານລາຍງານການເງິນ ແລະ ການກວດສອບອື່ນ ຂອງເປົ້າໝາຍຖືກກວດສອບ ຕາມສັນຍາ ລະຫວ່າງ ເປົ້າໝາຍດັ່ງກ່າວ ກັບ ວິສາຫະກິດກວດສອບ ຊຶ່ງດຳເນີນຢ່າງເປັນເອກະລາດ ໂດຍນັກກວດສອບຂອງວິສາຫະກິດກວດສອບ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການກວດສອບອື່ນ** ໝາຍເຖິງ ການທົບທວນຄືນ, ການປະເມີນ ຂໍ້ມູນ ຂ່າວສານ ກ່ຽວກັບການລາຍງານການເງິນ ແລະ ການລາຍງານທີ່ບໍ່ແມ່ນການເງິນ ເປັນຕົ້ນ ການກວດສອບການທຸຈະລິດ, ການກວດສອບຜົນກະທົບຕໍ່ສິ່ງແວດລ້ອມ ຕາມສັນຍາ ລະຫວ່າງ ເປົ້າໝາຍຖືກກວດສອບ ກັບ ວິສາຫະກິດກວດສອບ;

2. **ສະພາມາດຕະຖານສາກົນດ້ານການກວດສອບ ແລະ ການຮັບປະກັນ** ໝາຍເຖິງ ອົງການຈັດຕັ້ງທີ່ຖືກສ້າງຂຶ້ນ ພາຍໃຕ້ການຄຸ້ມຄອງ ຂອງສະຫະພັນນັກບັນຊີສາກົນ ແລະ ອົງການສ້າງມາດຕະຖານທີ່ເປັນເອກະລາດ;

3. **ສະຫະພັນນັກບັນຊີສາກົນ** (IFAC) ໝາຍເຖິງ ອົງການຈັດຕັ້ງວິຊາຊີບການບັນຊີສາກົນ ທີ່ປະກອບດ້ວຍ ສະມາຊິກສົມບູນ ແລະ ສະມາຊິກສົມທົບ ຊຶ່ງສ່ວນຫຼາຍກໍແມ່ນອົງການຈັດຕັ້ງວິຊາຊີບການບັນຊີ ຂອງແຕ່ລະປະເທດ;

4. **ນັກວິຊາຊີບການບັນຊີ** ໝາຍເຖິງ ນັກຊ່ຽວຊານບັນຊີ ທີ່ປະກອບອາຊີບ ໃນວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຫຼື ໃນຫົວໜ່ວຍຖືບັນຊີທົ່ວໄປ;

5. **ນັກຊ່ຽວຊານບັນຊີ** ໝາຍເຖິງ ບຸກຄົນທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ທີ່ອອກໂດຍ ກະຊວງການເງິນ;

6. **ນັກກວດສອບ** ໝາຍເຖິງ ນັກຊ່ຽວຊານບັນຊີ ທີ່ເປັນພະນັກງານ ຂອງວິສາຫະກິດກວດສອບ;

7. **ນັກກວດສອບຕາມກົດໝາຍ** ໝາຍເຖິງ ນັກກວດສອບ ທີ່ມີສິດລົງລາຍເຊັນໃສ່ບົດລາຍງານການກວດສອບ ໃນນາມວິສາຫະກິດກວດສອບ;

8. **ວິສາຫະກິດບັນຊີ** ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ໄດ້ຮັບອະນຸຍາດດໍາເນີນທຸລະກິດທາງດ້ານການບັນຊີ ຈາກກະຊວງການເງິນ;

9. **ວິສາຫະກິດກວດສອບ** ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ໄດ້ຮັບອະນຸຍາດດໍາເນີນທຸລະກິດທາງດ້ານການບັນຊີ ແລະ ການກວດສອບ ຈາກກະຊວງການເງິນ;

10. **ຫົວໜ່ວຍຖືບັນຊີ** ໝາຍເຖິງ ວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ, ວິສາຫະກິດຂະໜາດໃຫຍ່, ຂະໜາດນ້ອຍ ແລະ ກາງ, ຈຸນລະວິສາຫະກິດ, ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກໍາໄລ ແລະ ຫົວໜ່ວຍອື່ນ;

11. **ວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ** ໝາຍເຖິງ ວິສາຫະກິດທີ່ມີສ່ວນກ່ຽວຂ້ອງກັບຜົນປະໂຫຍດອັນສໍາຄັນຂອງສາທາລະນະ ເຊັ່ນ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ບໍລິສັດປະກັນໄພ, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ວິສາຫະກິດອື່ນ;

12. **ເອກະສານລາຍງານການເງິນ** ໝາຍເຖິງ ເອກະສານທີ່ສະແດງ ກ່ຽວກັບຖານະການເງິນ, ຜົນການດໍາເນີນງານດ້ານການເງິນ, ກະແສເງິນສົດ, ສ່ວນປ່ຽນແປງທຶນຂອງວິສາຫະກິດ ແລະ ເອກະສານຊ້ອນທ້າຍເອກະສານລາຍງານການເງິນ;

13. **ເອກະສານລາຍງານການເງິນລວມກິດຈະການ** ໝາຍເຖິງ ເອກະສານລາຍງານການເງິນຂອງບໍລິສັດແມ່ ຫຼື ກຸ່ມບໍລິສັດ ພ້ອມທັງບໍລິສັດໃນກຸ່ມ ທີ່ສະແດງອອກເປັນເອກະສານລາຍງານການເງິນຂອງບໍລິສັດດຽວ;

14. **ຜູ້ຮຸ້ນສ່ວນຮັບຜິດຊອບງານ** ໝາຍເຖິງ ຜູ້ຮຸ້ນສ່ວນບໍລິຫານໃນວິສາຫະກິດກວດສອບ ທີ່ມີຄວາມຮັບຜິດຊອບ ຕໍ່ການປະຕິບັດຂໍ້ຜູກພັນ, ຜົນການກວດສອບ ແລະ ລາຍງານການກວດສອບ ຂອງວິສາຫະກິດ;

15. **ຜູ້ຮຸ້ນສ່ວນບໍລິຫານ** ໝາຍເຖິງ ນັກຊ່ຽວຊານບັນຊີ ທີ່ຖືຮຸ້ນ ແລະ ມີສິດຕັດສິນບັນຫາໃນວິສາຫະກິດ ກ່ຽວກັບການປະຕິບັດຂໍ້ຜູກພັນໃນການໃຫ້ບໍລິການດ້ານວິຊາຊີບ;

16. **ຄະນະກໍາມະການຄຸ້ມຄອງນັກຊ່ຽວຊານບັນຊີອາຊຽນຂອງ ສປປ ລາວ** ໝາຍເຖິງ ຄະນະກໍາມະການທີ່ຖືກແຕ່ງຕັ້ງໂດຍ ກະຊວງການເງິນ ເພື່ອຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວວິຊາຊີບຂອງນັກຊ່ຽວຊານບັນຊີອາຊຽນ ຢູ່ ສປປ ລາວ ແລະ ນັກຊ່ຽວຊານບັນຊີລາວ ທີ່ໄປເຄື່ອນໄຫວຢູ່ປະເທດສະມາຊິກອາຊຽນ;

17. **ລະບົບຮັບປະກັນຄຸນນະພາບວຽກງານກວດສອບ** ໝາຍເຖິງ ລະບຽບການ, ຂັ້ນຕອນການດຳເນີນງານທາງດ້ານການບໍລິຫານ ແລະ ການເຄື່ອນໄຫວດ້ານການດຳເນີນງານ ເພື່ອຈຸດປະສົງໃນການຄຸ້ມຄອງ ແລະ ກວດກາ ຄຸນນະພາບຂອງວຽກງານກວດສອບອິດສະລະ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານກວດສອບອິດສະລະ**

ລັດ ຊຸກຍູ້, ສົ່ງເສີມ ວຽກງານກວດສອບອິດສະລະ ດຳເນີນຢ່າງເປັນເອກະລາດ ແລະ ເຂັ້ມງວດ ຕໍ່ທຸກການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ ເພື່ອໃຫ້ມີຄວາມ ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງ ຕາມມາດຕະຖານ, ກົດໝາຍ, ລະບຽບການ, ມີປະສິດທິພາບ ແລະ ມີປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມ ການພັດທະນາວິຊາຊີບການບັນຊີ ແລະ ການກວດສອບ ໃຫ້ມີຄວາມເຂັ້ມແຂງ, ສອດຄ່ອງກັບ ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານກວດສອບອິດສະລະ**

ວຽກງານກວດສອບອິດສະລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການຈັດຕັ້ງປະຕິບັດ ຕາມມາດຕະຖານວິຊາຊີບດ້ານການກວດສອບ;
4. ຮັບປະກັນ ຄວາມທ່ຽງທຳ, ໂປ່ງໃສ, ພາວະວິໄສ, ເປັນເອກະລາດທາງດ້ານວິຊາການ ແລະ ສາມາດກວດສອບໄດ້;
5. ຮັບປະກັນການມີ ຂໍ້ມູນ ຫຼັກຖານ ຄົບຖ້ວນ, ຊັດເຈນ ແລະ ຖືກຕ້ອງກັບຄວາມເປັນຈິງ;
6. ຮັກສາຄວາມລັບ ແລະ ມີຈັນຍາບັນດ້ານວິຊາຊີບການບັນຊີ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານບັນຊີ ແລະ ວຽກງານກວດສອບອິດສະລະ ຢູ່ ສປປ ລາວ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບອິດສະລະ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ, ເຕັກໂນໂລຊີ, ການຝຶກອົບຮົມ, ການສ້າງຄວາມສາມາດ ເພື່ອພັດທະນາວຽກງານກວດສອບອິດສະລະ ໃຫ້ເຂັ້ມແຂງ, ທັນສະໄໝ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການເຄື່ອນໄຫວການກວດສອບອິດສະລະ
### ໝວດທີ 1
### ຮູບແບບການກວດສອບອິດສະລະ

**ມາດຕາ 8 (ປັບປຸງ) ຮູບແບບການກວດສອບອິດສະລະ**

ການກວດສອບອິດສະລະ ມີ ສອງຮູບແບບ ດັ່ງນີ້:

1. ການກວດສອບຕາມກົດໝາຍ;
2. ການກວດສອບຕາມຄວາມສະໝັກໃຈ.

ການກວດສອບຕາມກົດໝາຍ ແລະ ການກວດສອບຕາມຄວາມສະໝັກໃຈ ດຳເນີນຂະບວນການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 9 ການກວດສອບຕາມກົດໝາຍ**

ການກວດສອບຕາມກົດໝາຍ ແມ່ນ ການກວດສອບເອກະສານລາຍງານການເງິນປະຈຳປີ ຂອງເປົ້າໝາຍຖືກກວດສອບ ແບບບັງຄັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 10 (ປັບປຸງ) ການກວດສອບຕາມຄວາມສະໝັກໃຈ**

ການກວດສອບຕາມຄວາມສະໝັກໃຈ ແມ່ນ ການກວດສອບເອກະສານລາຍງານການເງິນ ແລະ ການກວດສອບອື່ນ ຕາມການສະເໜີຂອງເປົ້າໝາຍຖືກກວດສອບ ພາຍໃຕ້ສັນຍາຮ່ວມກັນ.

### ໝວດທີ 2
### ຂະບວນການກວດສອບ

**ມາດຕາ 11 (ປັບປຸງ) ຂະບວນການກວດສອບ**

ການກວດສອບ ຕ້ອງດຳເນີນຕາມຂະບວນການ ດັ່ງນີ້:

1. ການຄັດເລືອກນັກກວດສອບ;
2. ການສ້າງສັນຍາກວດສອບ;
3. ການສ້າງແຜນການກວດສອບ;
4. ການດຳເນີນການກວດສອບ;
5. ການສ້າງບົດລາຍງານຜົນການກວດສອບ.

ວິສາຫະກິດກວດສອບ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານວິຊາຊີບດ້ານການກວດສອບ.

**ມາດຕາ 12 (ປັບປຸງ) ການຄັດເລືອກນັກກວດສອບ**

ການຄັດເລືອກນັກກວດສອບ ດຳເນີນດ້ວຍວິທີໃດໜຶ່ງ ດັ່ງນີ້:

1. ການປະມູນ ແລະ ຮັບຮອງໂດຍ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ຫຼື ກອງປະຊຸມຂອງການຈັດຕັ້ງທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດສອບ;

2. ການສະເໜີຂອງ ຜູ້ໃຫ້ກູ້ຢືມ, ຜູ້ໃຫ້ທຶນ, ນັກລົງທຶນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 13 (ປັບປຸງ) ການສ້າງສັນຍາກວດສອບ**

ການສ້າງສັນຍາກວດສອບ ແມ່ນ ການເຊັນຂໍ້ຜູກພັນດ້ານການກວດສອບ ລະຫວ່າງ ວິສາຫະກິດກວດສອບ ກັບເປົ້າໝາຍຖືກກວດສອບ.

ສັນຍາກວດສອບ ມີເນື້ອໃນ ດັ່ງນີ້:

1. ຈຸດປະສົງ ແລະ ຂອບເຂດການກວດສອບ;
2. ກຳນົດເວລາ ຂອງສັນຍາກວດສອບ;
3. ສິດ, ໜ້າທີ່ ແລະ ພັນທະ ຂອງວິສາຫະກິດກວດສອບ ແລະ ເປົ້າໝາຍຖືກກວດສອບ;
4. ຄວາມຮັບຜິດຊອບໃນການ ຊຳລະ, ຮັບຄ່າບໍລິການກວດສອບ ແລະ ຄ່າໃຊ້ຈ່າຍອື່ນ ທີ່ທັງສອງຝ່າຍຕົກລົງກັນ;
5. ຮູບແບບ ແລະ ເນື້ອໃນຂອງບົດລາຍງານຜົນການກວດສອບ.

**ມາດຕາ 14 ການສ້າງແຜນການກວດສອບ**

ການສ້າງແຜນການກວດສອບ ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ສຶກສາລັກສະນະ ແລະ ສະພາບແວດລ້ອມຂອງລູກຄ້າ ລວມທັງການຄວບຄຸມພາຍໃນ;
2. ປະເມີນຜົນຄວາມສ່ຽງ ຂອງການລາຍງານຜິດພາດ ແລະ ຄວາມສ່ຽງຂອງການກວດສອບ;
3. ກຳນົດຍຸດທະສາດ, ສ້າງແຜນການກວດສອບ, ວາງແຜນງານກວດສອບ, ວິທີການກວດສອບ, ກຳນົດເປົ້າໝາຍ, ກະກຽມຄຳຖາມເຈາະຈີ້ມ, ສອບຖາມພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາຫຼັກຖານທີ່ແທດເໝາະ, ພຽງພໍ ແລະ ກຳນົດເວລາການກວດສອບ.

**ມາດຕາ 15 ການດຳເນີນການກວດສອບ**

ການດຳເນີນການກວດສອບ ຕ້ອງປະຕິບັດຕາມເນື້ອໃນຂອງສັນຍາກວດສອບ, ຕາມແຜນການ, ແຜນງານ, ມາດຕະຖານວິຊາຊີບດ້ານການກວດສອບ, ກຳນົດ ແລະ ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ໃນຄະນະກວດສອບ ໂດຍມີການຄວບຄຸມຢ່າງເຂັ້ມງວດ ຈາກຫົວໜ້າຄະນະດັ່ງກ່າວ.

**ມາດຕາ 16 (ປັບປຸງ) ການສ້າງບົດລາຍງານຜົນການກວດສອບ**

ບົດລາຍງານຜົນການກວດສອບ ຕ້ອງສ້າງຂຶ້ນຕາມທີ່ໄດ້ກຳນົດໄວ້ໃນມາດຕະຖານວິຊາຊີບດ້ານການກວດສອບ ຊຶ່ງໂຄງຮ່າງຂອງບົດລາຍງານຜົນການກວດສອບ ປະກອບດ້ວຍ:

1. ຄຳເຫັນຕໍ່ເອກະສານລາຍງານການເງິນ ທີ່ຖືກກວດສອບ ໂດຍສອດຄ່ອງກັບກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ພື້ນຖານໃນການອອກຄຳເຫັນ;
3. ເນື້ອໃນການກວດສອບທີ່ສຳຄັນ;
4. ຄວາມຮັບຜິດຊອບ ຂອງເປົ້າໝາຍຖືກກວດສອບ ແລະ ວິສາຫະກິດກວດສອບ.

ບົດລາຍງານຜົນການກວດສອບ ຕ້ອງມີລາຍເຊັນ ຂອງນັກກວດສອບຕາມກົດໝາຍ ແລະ ສົ່ງໃຫ້ເປົ້າໝາຍຖືກກວດສອບ ແລະ/ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 17 (ປັບປຸງ) ຄຸນປະໂຫຍດຂອງບົດລາຍງານຜົນການກວດສອບ**

ບົດລາຍງານຜົນການກວດສອບ ມີຄຸນປະໂຫຍດ ດັ່ງນີ້:

1. ຜູ້ຖືຮຸ້ນ ນຳໃຊ້ເພື່ອເປັນພື້ນຖານໃຫ້ແກ່ການພິຈາລະນາ ຮັບຮອງເອົາບົດສະຫຼຸບຜົນການເຄື່ອນໄຫວຜ່ານມາ, ການວາງແຜນການປີຕໍ່ໄປ ແລະ ການແບ່ງເງິນປັນຜົນ;

2. ຜູ້ບໍລິຫານ ນຳໃຊ້ເພື່ອສຳຫຼວດຄືນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ພິຈາລະນາ ປັບປຸງ, ແກ້ໄຂ;

3. ນັກລົງທຶນ ນຳໃຊ້ເພື່ອປະເມີນຜົນການຄຸ້ມຄອງທຸລະກິດ ແລະ ຕັດສິນໃຈໃນການລົງທຶນ;

4. ຜູ້ໃຫ້ທຶນ, ເຈົ້າຂອງໂຄງການ ນຳໃຊ້ເພື່ອສຶກສາປະສິດທິຜົນ ກ່ຽວກັບການຄຸ້ມຄອງ ແລະ ຄວາມສາມາດໃນການຊຳລະເງິນກູ້ຢືມ ພ້ອມດອກເບ້ຍຄືນຜູ້ໃຫ້ຢືມ;

5. ນັກກວດສອບທີ່ໄດ້ຮັບການຄັດເລືອກ ນຳໃຊ້ເພື່ອເປັນພື້ນຖານ ໃຫ້ແກ່ການຕິດຕາມການປະຕິບັດຄຳແນະນຳຂອງນັກກວດສອບຜູ້ກ່ອນ ແລະ ເປັນພື້ນຖານໃນການວາງແຜນ ແລະ ດຳເນີນການກວດສອບ;

6. ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ນຳໃຊ້ເປັນພື້ນຖານການຄິດໄລ່ເກັບອາກອນ, ຕີລາຄາຄວາມໜ້າເຊື່ອຖືຂອງລະບົບ ຂໍ້ມູນ ຂ່າວສານ ແລະ ເປັນພື້ນຖານໃຫ້ແກ່ການສະໜອງ ຂໍ້ມູນ ຂ່າວສານສະຖິຕິ;

7. ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ນຳໃຊ້ເພື່ອເປັນ ຂໍ້ມູນ ຫຼັກຖານ ໃນການດຳເນີນຄະດີ.

**ມາດຕາ 18 ເອກະສານການກວດສອບ**

ເອກະສານການກວດສອບ ແມ່ນ ເອກະສານທີ່ນັກກວດສອບ ເກັບກຳ, ລວບລວມ, ສັງລວມ ແລະ ສ້າງຂຶ້ນ ໃນເວລາດຳເນີນການກວດສອບ ແລະ ບັນດາຂໍ້ມູນທີ່ໄດ້ຮັບ ເຊັ່ນ ໜັງສືຮັບວຽກ, ຍຸດທະສາດການກວດສອບລວມ ແລະ ແຜນງານກວດສອບ, ບົດລາຍງານຜົນການກວດສອບ, ຈົດໝາຍແນະນຳ, ເອກະສານລາຍງານການເງິນສະເພາະກິດຈະການ ຫຼື ລວມກິດຈະການ, ບົດລາຍງານປະຈຳປີ ຫຼື ບົດລາຍງານ ລວມກິດຈະການປະຈຳປີ ແລະ ເອກະສານອື່ນ ທີ່ປະກອບເປັນເອກະສານການກວດສອບ ເພື່ອເປັນພື້ນຖານ ໃນການໃຫ້ຄຳເຫັນຂອງນັກກວດສອບ.

ຄະນະກວດສອບ ຕ້ອງລວບລວມເອກະສານການກວດສອບ ໄວ້ໃນສຳນວນເອກະສານການກວດສອບພາຍໃນເວລາ ສາມເດືອນ ຫຼັງຈາກສຳເລັດການສ້າງບົດລາຍງານຜົນການກວດສອບ.

ວິສາຫະກິດກວດສອບ ຕ້ອງສ້າງເອກະສານການກວດສອບ ໂດຍສອດຄ່ອງກັບມາດຕະຖານວິຊາຊີບດ້ານການກວດສອບ.

## ໝວດທີ 3
## ການກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ

**ມາດຕາ 19 (ປັບປຸງ) ການກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ**

ການກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນພາກທີ II, ໝວດທີ 2 ຂອງກົດໝາຍສະບັບນີ້, ຍົກເວັ້ນມາດຕາ 12 ແລະ ຍັງຕ້ອງປະຕິບັດເພີ່ມເຕີມດັ່ງນີ້:

1. ການຄັດເລືອກ ນັກກວດສອບຕາມກົດໝາຍ;
2. ກຳນົດເວລາ ແລະ ການສິ້ນສຸດ ຂອງສັນຍາກວດສອບ;
3. ການປ່ຽນແທນນັກກວດສອບຕາມກົດໝາຍ;

4. ການຍົກເລີກສັນຍາກວດສອບ;

5. ຄວາມເປັນເອກະລາດ ຂອງນັກກວດສອບຕາມກົດໝາຍ;

6. ການເປີດເຜີຍຄ່າບໍລິການການກວດສອບ;

7. ບົດລາຍງານຄວາມໂປ່ງໃສ.

**ມາດຕາ 20 ການຄັດເລືອກນັກກວດສອບຕາມກົດໝາຍ**

ເປົ້າໝາຍຖືກກວດສອບທີ່ເປັນວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ຕ້ອງຄັດເລືອກນັກກວດສອບຕາມກົດໝາຍ ຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງເຊີນການຮັບສະໝັກນັກກວດສອບຕາມກົດໝາຍ ຢ່າງໜ້ອຍ ຫົກສິບວັນ ກ່ອນວັນເປີດກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງຕົນ ໃຫ້ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

2. ເປົ້າໝາຍຖືກກວດສອບຕາມກົດໝາຍ ຕ້ອງຄົ້ນຄວ້າ ແລະ ປະກອບຄຳເຫັນ ໃສ່ເອກະສານສະໝັກຂອງວິສາຫະກິດກວດສອບ ຢ່າງໜ້ອຍ ສາມສິບວັນ ກ່ອນວັນເປີດກອງປະຊຸມຜູ້ຖືຮຸ້ນ ເພື່ອໃຫ້ກອງປະຊຸມດັ່ງກ່າວພິຈາລະນາ;

3. ກອງປະຊຸມຜູ້ຖືຮຸ້ນ ອາດພິຈາລະນາຄັດເລືອກນັກກວດສອບຕາມກົດໝາຍຈາກ ໜຶ່ງ ຫຼື ສອງວິສາຫະກິດ ຂຶ້ນໄປ ເພື່ອກວດສອບເອກະສານລາຍງານການເງິນປະຈຳປີຂອງຕົນກໍໄດ້;

4. ແຈ້ງຜົນການຄັດເລືອກ ໃຫ້ນັກກວດສອບຕາມກົດໝາຍທີ່ຖືກຮັບຮອງເອົາ.

**ມາດຕາ 21 ກຳນົດເວລາ ແລະ ການສິ້ນສຸດ ຂອງສັນຍາກວດສອບ**

ສັນຍາກວດສອບ ລະຫວ່າງ ເປົ້າໝາຍຖືກກວດສອບ ຊຶ່ງເປັນວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ກັບ ວິສາຫະກິດກວດສອບ ມີອາຍຸການ ຫ້າປີ ການບັນຊີ ແລະ ສາມາດຕໍ່ໄດ້ອີກວາລະໜຶ່ງ ແຕ່ຕ້ອງໃຫ້ມີການສັບປ່ຽນນັກກວດສອບຕາມກົດໝາຍຜູ້ໃໝ່.

ສັນຍາກວດສອບ ຈະສິ້ນສຸດ ກໍຕໍ່ເມື່ອເອກະສານລາຍງານການເງິນປະຈຳປີ ຂອງປີການບັນຊີ ສຸດທ້າຍໄດ້ຖືກຮັບຮອງເອົາໂດຍກອງປະຊຸມໃຫຍ່ຜູ້ຖືຮຸ້ນຂອງວິສາຫະກິດ ຫຼື ກອງປະຊຸມອົງການຈັດຕັ້ງໃດໜຶ່ງ.

ໃນກໍລະນີ ວິສາຫະກິດກວດສອບ ມີຈຸດປະສົງຕໍ່ອາຍຸການກວດສອບ ໃຫ້ຍື່ນຄຳຮ້ອງຕໍ່ເປົ້າໝາຍຖືກກວດສອບຕາມກົດໝາຍ ຢ່າງໜ້ອຍ ຫົກສິບວັນ ກ່ອນໝົດອາຍຸສັນຍາ.

**ມາດຕາ 22 ການປ່ຽນແທນນັກກວດສອບຕາມກົດໝາຍ**

ການປ່ຽນແທນນັກກວດສອບຕາມກົດໝາຍ ມີ ສອງກໍລະນີ ຄື:

1. ການປ່ຽນແທນຖາວອນ ຊຶ່ງແມ່ນ ການປ່ຽນແທນນັກກວດສອບຕາມກົດໝາຍ ໃນກໍລະນີມີການປະຕິເສດ, ລາອອກ ຫຼື ເສຍຊີວິດ ຕ້ອງຄັດເລືອກ ແລະ ແຕ່ງຕັ້ງ ນັກກວດສອບຕາມກົດໝາຍຜູ້ໃໝ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍສະບັບນີ້. ໜ້າທີ່ຂອງນັກກວດສອບຕາມກົດໝາຍ ທີ່ມາປ່ຽນແທນ ຈະສິ້ນສຸດຕາມສັນຍາ ຂອງນັກກວດສອບຕາມກົດໝາຍຜູ້ກ່ອນ;

2. ການປ່ຽນແທນຊົ່ວຄາວ ຊຶ່ງແມ່ນ ການປ່ຽນແທນນັກກວດສອບຕາມກົດໝາຍ ໃນກໍລະນີຈຳເປັນ. ນັກກວດສອບຕາມກົດໝາຍນັ້ນສາມາດກັບມາເຮັດວຽກຂອງຕົນຄືນ ພາຍຫຼັງກອງປະຊຸມໃຫຍ່ຜູ້ຖືຮຸ້ນ ຂອງເປົ້າໝາຍຖືກກວດສອບຕາມກົດໝາຍ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງໄດ້ຮັບຮອງ ເອກະສານລາຍງານການເງິນປະຈຳປີ.

ນັກກວດສອບຕາມກົດໝາຍທີ່ມາປ່ຽນແທນ ສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ແລະ ເອກະສານທີ່ກ່ຽວຂ້ອງກັບການກວດສອບຂອງນັກກວດສອບຕາມກົດໝາຍຜູ້ກ່ອນ.

**ມາດຕາ 23 ການຍົກເລີກສັນຍາກວດສອບ**

ສັນຍາກວດສອບ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງເປົ້າໝາຍຖືກກວດສອບ ຫຼື ນັກກວດສອບ ຕາມກົດໝາຍ;
2. ຖືກໂຈະການເຄື່ອນໄຫວດ້ານວິຊາຊີບ;
3. ຖືກຖອນໃບອະນຸຍາດເປັນນັກກວດສອບຕາມກົດໝາຍ ຫຼື ລາອອກ;
4. ດຳເນີນການກວດສອບບໍ່ເປັນເອກະລາດ, ບໍ່ໄດ້ຮັບການຮ່ວມມື ຫຼື ຖືກບັງຄັບໃຫ້ດຳເນີນການໃດໜຶ່ງ ທີ່ບໍ່ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 24 ຄວາມເປັນເອກະລາດຂອງນັກກວດສອບຕາມກົດໝາຍ**

ຄວາມເປັນເອກະລາດຂອງນັກກວດສອບຕາມກົດໝາຍ ທີ່ກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ໃຫ້ປະຕິບັດ ດັ່ງນີ້:

1. ຢັ້ງຢືນຄວາມເປັນເອກະລາດຂອງຕົນ ໃຫ້ແກ່ຄະນະກຳມະການກວດສອບຂອງວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ຢ່າງເປັນລາຍລັກອັກສອນ ໃນແຕ່ລະປີ;
2. ແຈ້ງສັນຍາເພີ່ມເຕີມ ກ່ຽວກັບການໃຫ້ບໍລິການອື່ນ ຕໍ່ຄະນະກຳມະການກວດສອບຂອງວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ໃນແຕ່ລະປີ;
3. ປຶກສາຫາລືນຳຄະນະກຳມະການກວດສອບຂອງ ວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ກ່ຽວກັບ ບັນຫາ ແລະ ອຸປະສັກຕໍ່ຄວາມເປັນເອກະລາດ ແລະ ວິທີການປ້ອງກັນທີ່ນຳໃຊ້ ເພື່ອຫຼຸດຜ່ອນບັນຫາ ແລະ ອຸປະສັກດັ່ງກ່າວ.

**ມາດຕາ 25 ການເປີດເຜີຍຄ່າບໍລິການການກວດສອບ**

ນັກກວດສອບຕາມກົດໝາຍ ທີ່ກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ຕ້ອງເປີດເຜີຍຄ່າບໍລິການການກວດສອບ ພ້ອມດ້ວຍຄ່າບໍລິການອື່ນ ໂດຍແຍກໃຫ້ເຫັນການບໍລິການການກວດສອບ, ການບໍລິການທົບທວນຄືນ ແລະ ການບໍລິການອື່ນທີ່ບໍ່ແມ່ນການກວດສອບ ໃນໄລຍະດຳເນີນການກວດສອບ ໃນວາລະສານຂອງກະຊວງການເງິນ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

**ມາດຕາ 26 (ປັບປຸງ) ບົດລາຍງານຄວາມໂປ່ງໃສ**

ວິສາຫະກິດກວດສອບ ທີ່ດຳເນີນການກວດສອບວິສາຫະກິດທີ່ຕິດພັນກັບຜົນປະໂຫຍດສາທາລະນະ ຕ້ອງລາຍງານຄວາມໂປ່ງໃສປະຈຳປີ ລົງໃນເວັບໄຊຂອງຕົນ ຫຼື ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ພາຍໃນເວລາ ເກົ້າສິບວັນ ພາຍຫຼັງປີການບັນຊີ.

ບົດລາຍງານຄວາມໂປ່ງໃສ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຮູບແບບວິສາຫະກິດ ແລະ ການເປັນກຳມະສິດ;
2. ເຄືອຂ່າຍ ແລະ ຂໍ້ຕົກລົງທາງດ້ານກົດໝາຍ ແລະ ໂຄງປະກອບໃນເຄືອຂ່າຍ ຖ້ານັກກວດສອບຢູ່ໃນເຄືອຂ່າຍໃດໜຶ່ງ;
3. ໂຄງສ້າງດ້ານການຄຸ້ມຄອງບໍລິຫານ;
4. ລະບົບຄວບຄຸມຄຸນນະພາບພາຍໃນ ແລະ ການລາຍງານ ກ່ຽວກັບຜົນການດຳເນີນງານ ຂອງລະບົບຄວບຄຸມຄຸນນະພາບ ໂດຍຄະນະຜູ້ບໍລິຫານ ຂອງວິສາຫະກິດກວດສອບ;
5. ການກວດກາການຮັບປະກັນຄຸນນະພາບຄັ້ງຫຼ້າສຸດ;
6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

## ໝວດທີ 4
## ລະບຽບການເຄື່ອນໄຫວຂອງຜູ້ປະກອບອາຊີບ ການບັນຊີ ແລະ ການກວດສອບ

**ມາດຕາ 27 (ປັບປຸງ) ລະບຽບການເຄື່ອນໄຫວຂອງຜູ້ປະກອບອາຊີບ ການບັນຊີ ແລະ ການກວດສອບ**

ລະບຽບການເຄື່ອນໄຫວ ຂອງຜູ້ປະກອບອາຊີບ ການບັນຊີ ແລະ ການກວດສອບ ມີ ດັ່ງນີ້:

1. ຈັນຍາບັນດ້ານວິຊາຊີບການບັນຊີ;
2. ມາດຕະຖານວິຊາຊີບດ້ານການກວດສອບ;
3. ການຮັບປະກັນຄຸນນະພາບດ້ານການກວດສອບພາຍໃນວິສາຫະກິດກວດສອບ;
4. ການປະກັນໄພຄ່າເສຍຫາຍດ້ານວິຊາຊີບ;
5. ການຍົກລະດັບວິຊາຊີບແບບຕໍ່ເນື່ອງ.

**ມາດຕາ 28 ຈັນຍາບັນດ້ານວິຊາຊີບການບັນຊີ**

ຈັນຍາບັນດ້ານວິຊາຊີບການບັນຊີ ແມ່ນ ຫຼັກການພື້ນຖານໃນການປະພຶດ ແລະ ການເຄື່ອນໄຫວດ້ານວິຊາຊີບຂອງຜູ້ປະກອບອາຊີບ ການບັນຊີ ແລະ ການກວດສອບ.

ກະຊວງການເງິນ ກໍານົດ ແລະ ປະກາດໃຊ້ ຈັນຍາບັນດ້ານວິຊາຊີບການບັນຊີ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ ແລະ ຈັນຍາບັນຂອງສະຫະພັນນັກບັນຊີສາກົນ.

**ມາດຕາ 29 (ປັບປຸງ) ມາດຕະຖານວິຊາຊີບດ້ານການກວດສອບ**

ມາດຕະຖານວິຊາຊີບດ້ານການກວດສອບ ແມ່ນ ລະບຽບການ ແລະ ວິທີການປະຕິບັດ ໃນການເຄື່ອນໄຫວດ້ານວິຊາຊີບຂອງຜູ້ປະກອບອາຊີບ ການບັນຊີ ແລະ ການກວດສອບ ຊຶ່ງປະກອບດ້ວຍ ມາດຕະຖານການຄວບຄຸມຄຸນນະພາບ, ມາດຕະຖານດ້ານການກວດສອບ, ມາດຕະຖານການທົບທວນຄືນ, ມາດຕະຖານວຽກງານທີ່ໃຫ້ການຮັບປະກັນ ແລະ ມາດຕະຖານດ້ານການບໍລິການອື່ນທີ່ກ່ຽວຂ້ອງ.

ກະຊວງການເງິນ ກໍານົດ ແລະ ປະກາດໃຊ້ ມາດຕະຖານວິຊາຊີບດ້ານການກວດສອບ ໂດຍສອດຄ່ອງກັບກົດໝາຍ ຂອງ ສປປ ລາວ ແລະ ມາດຕະຖານສາກົນຂອງສະພາມາດຕະຖານສາກົນດ້ານການກວດສອບ ແລະ ການຮັບປະກັນ.

**ມາດຕາ 30 (ປັບປຸງ) ການຮັບປະກັນຄຸນນະພາບດ້ານການກວດສອບພາຍໃນວິສາຫະກິດກວດສອບ**

ວິສາຫະກິດກວດສອບ ຕ້ອງສ້າງລະບົບການຮັບປະກັນຄຸນນະພາບດ້ານການກວດສອບ ໃຫ້ສອດຄ່ອງກັບກົດໝາຍສະບັບນີ້, ມາດຕະຖານວິຊາຊີບດ້ານການກວດສອບ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ນັກກວດສອບດໍາເນີນວິຊາຊີບຢ່າງຖືກຕ້ອງ, ຮັບປະກັນຄວາມສົມເຫດສົມຜົນ ແລະ ລາຍງານຜົນການກວດສອບໃຫ້ແທດເໝາະກັບສະພາບການຕົວຈິງ.

ລະບົບການຮັບປະກັນຄຸນນະພາບດ້ານການກວດສອບ ປະກອບດ້ວຍ:

1. ຄວາມຮັບຜິດຊອບຂອງຄະນະບໍລິຫານ ຕໍ່ຄຸນນະພາບພາຍໃນວິສາຫະກິດກວດສອບ;
2. ຈັນຍາບັນດ້ານວິຊາຊີບການບັນຊີ;
3. ການຮັບລູກຄ້າ ແລະ ການສືບຕໍ່ຮັບລູກຄ້າເກົ່າ ແລະ ວຽກທີ່ມີລັກສະນະສະເພາະ;
4. ບຸກຄະລາກອນ;
5. ຜົນການຈັດຕັ້ງປະຕິບັດ;
6. ການຕິດຕາມ ກວດກາ.

ວິສາຫະກິດກວດສອບ ຕ້ອງໄດ້ຮັບການກວດກາລະບົບການຮັບປະກັນຄຸນນະພາບດ້ານການກວດສອບ ຈາກກະຊວງການເງິນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງໜ້ອຍ ສີ່ປີ ຕໍ່ຄັ້ງ.

**ມາດຕາ 31 (ປັບປຸງ) ການປະກັນໄພຄ່າເສຍຫາຍດ້ານວິຊາຊີບ**

ວິສາຫະກິດກວດສອບ ຕ້ອງປະກັນໄພຄ່າເສຍຫາຍດ້ານວິຊາຊີບ ເພື່ອຄໍ້າປະກັນການເສຍຫາຍໃດໜຶ່ງ ທີ່ອາດຈະເກີດຂຶ້ນ ໃນເວລາປະຕິບັດຂໍ້ຜູກພັນດ້ານວິຊາຊີບຂອງຕົນ ແລະ ຕ້ອງສົ່ງສຳເນົາສັນຍາປະກັນໄພ ພ້ອມດ້ວຍ ນະໂຍບາຍການປະກັນໄພດ້ານວິຊາຊີບ ໃຫ້ກະຊວງການເງິນ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ໃນແຕ່ລະປີ.

ສຳລັບລາຍລະອຽດການປະກັນໄພຄ່າເສຍຫາຍດ້ານວິຊາຊີບ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 32 (ປັບປຸງ) ການຍົກລະດັບວິຊາຊີບແບບຕໍ່ເນື່ອງ**

ນັກວິຊາຊີບການບັນຊີ ຕ້ອງເຂົ້າຮ່ວມການຍົກລະດັບວິຊາຊີບແບບຕໍ່ເນື່ອງ ຢ່າງໜ້ອຍ ສີ່ສິບຊົ່ວໂມງ ຕໍ່ປີ ເພື່ອຍົກລະດັບຄວາມຮູ້ທາງດ້ານ ກົດໝາຍ, ລະບຽບການ ແລະ ຈັນຍາບັນ ດ້ານວິຊາຊີບການບັນຊີ.

ກະຊວງການເງິນ ອອກລະບຽບການ ກ່ຽວກັບການຍົກລະດັບວິຊາຊີບແບບຕໍ່ເນື່ອງ ໃນແຕ່ລະໄລຍະ.

## ພາກທີ III
## ນັກຊ່ຽວຊານບັນຊີ
## ໝວດທີ 1
## ການເປັນນັກຊ່ຽວຊານບັນຊີ

**ມາດຕາ 33 (ປັບປຸງ) ເງື່ອນໄຂການເປັນນັກຊ່ຽວຊານບັນຊີ**

ບຸກຄົນ ທີ່ຈະເປັນນັກຊ່ຽວຊານບັນຊີ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ;
2. ໄດ້ຝຶກງານເປັນນັກຊ່ຽວຊານບັນຊີ.

**ມາດຕາ 34 (ປັບປຸງ) ການຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ**

ບຸກຄົນ ທີ່ມີຈຸດປະສົງຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ ໃຫ້ຍື່ນຄຳຮ້ອງ, ເອກະສານປະກອບ ຕໍ່ສະພາ ວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ເຂົ້າຮ່ວມການຝຶກອົບຮົມ ຕາມຫຼັກສູດຢ່າງຄົບຖ້ວນ ແລະ ສອບເສັງຜ່ານຫຼັກສູດວິຊາຊີບຊ່ຽວຊານບັນຊີ ທີ່ກະຊວງການເງິນກຳນົດ. ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເປັນຜູ້ອອກໃບຢັ້ງຢືນໃຫ້ບຸກຄົນ ທີ່ສຳເລັດການຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ.

**ມາດຕາ 35 (ປັບປຸງ) ການຝຶກງານເປັນນັກຊ່ຽວຊານບັນຊີ**

ບຸກຄົນ ທີ່ສຳເລັດການຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງ ກົດໝາຍສະບັບນີ້ ຊຶ່ງມີຈຸດປະສົງເປັນນັກຊ່ຽວຊານບັນຊີ ຕ້ອງໄດ້ຜ່ານການຝຶກງານວຽກງານບັນຊີ ແລະ ກວດສອບ ເປັນເວລາ ສາມປີ ຢູ່ ພາຍໃນ ຫຼື ຕ່າງປະເທດ, ຍົກເວັ້ນບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງກົດໝາຍ ສະບັບນີ້. ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ເປັນຜູ້ອອກໃບຢັ້ງຢືນໃຫ້ບຸກຄົນ ທີ່ສຳເລັດການຝຶກ ງານເປັນນັກຊ່ຽວຊານບັນຊີ.

**ມາດຕາ 36 (ປັບປຸງ) ການຍົກເວັ້ນການຝຶກງານເປັນນັກຊ່ຽວຊານບັນຊີ**

ບຸກຄົນ ທີ່ໄດ້ຮັບການຍົກເວັ້ນການຝຶກງານເປັນນັກຊ່ຽວຊານບັນຊີ ມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ມີໃບຢັ້ງຢືນນັກຊ່ຽວຊານບັນຊີ ຈາກຕ່າງປະເທດ;
2. ເປັນຄູສອນວິຊາ ການບັນຊີ ຫຼື ການກວດສອບ ຢ່າງໜ້ອຍ ສິບປີ;
3. ມີວຸດທິການສຶກສາລະດັບ ປະລິນຍາໂທ ຫຼື ປະລິນຍາເອກ ດ້ານການບັນຊີ, ການເງິນ ຫຼື ການກວດສອບ ແລະ ມີປະສົບການ ກ່ຽວກັບວຽກງານ ບັນຊີ ຫຼື ກວດສອບ ຢ່າງໜ້ອຍ ສິບປີ;
4. ເປັນ ສາດສະດາຈານ, ຮອງສາດສະດາຈານ ດ້ານການບັນຊີ, ການເງິນ ຫຼື ການກວດສອບ.

**ມາດຕາ 37 (ປັບປຸງ) ການອອກໃບຢັ້ງຢືນນັກຊ່ຽວຊານບັນຊີ**

ກະຊວງການເງິນ ອອກໃບຢັ້ງຢືນນັກຊ່ຽວຊານບັນຊີ ໃຫ້ບຸກຄົນ ທີ່ສຳເລັດການຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ ແລະ ຜ່ານການຝຶກງານເປັນນັກຊ່ຽວຊານບັນຊີ ຕາມການສະເໜີຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ.

ນັກຊ່ຽວຊານບັນຊີ ກ່ອນຈະເຄື່ອນໄຫວວິຊາຊີບການບັນຊີ ຕ້ອງຂຶ້ນທະບຽນປະກອບອາຊີບນຳກະຊວງການເງິນ.

**ມາດຕາ 38 (ໃໝ່) ການເປັນນັກຊ່ຽວຊານບັນຊີ ຂອງ ສປປ ລາວ ຂອງນັກຊ່ຽວຊານບັນຊີຕ່າງປະເທດ**

ນັກຊ່ຽວຊານບັນຊີຕ່າງປະເທດ ແມ່ນ ບຸກຄົນ ທີ່ມີໃບຢັ້ງຢືນນັກຊ່ຽວຊານບັນຊີອາຊຽນ ຫຼື ໃບຢັ້ງຢືນນັກຊ່ຽວຊານບັນຊີ ຈາກອົງການຈັດຕັ້ງວິຊາຊີບຂອງ ພາກພື້ນ, ສາກົນ ຫຼື ອົງການທີ່ມີສິດອຳນາດຂອງປະເທດໃດໜຶ່ງ ຊຶ່ງໃບຢັ້ງຢືນດັ່ງກ່າວ ຍັງມີຜົນສັກສິດຢູ່.

ນັກຊ່ຽວຊານບັນຊີຕ່າງປະເທດ ທີ່ມີຈຸດປະສົງເປັນນັກຊ່ຽວຊານບັນຊີ ຂອງ ສປປ ລາວ ຕ້ອງໄດ້ຜ່ານການທົດສອບຄວາມສາມາດຈາກສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ ຈາກກະຊວງການເງິນ.

**ມາດຕາ 39 (ປັບປຸງ) ສິດ ຂອງນັກຊ່ຽວຊານບັນຊີ**

ນັກຊ່ຽວຊານບັນຊີ ມີສິດ ດັ່ງນີ້:

1. ປະກອບອາຊີບການບັນຊີ ແລະ ການກວດສອບ ໃນຮູບແບບວິສາຫະກິດ ຫຼື ເປັນຜູ້ຖືຮຸ້ນ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
2. ເປັນ ຫົວໜ້າບັນຊີ, ຮຸ້ນສ່ວນຮັບຜິດຊອບງານ, ນັກກວດສອບ, ນັກກວດສອບຕາມກົດໝາຍ, ພະນັກງານບັນຊີ ຫຼື ຕຳແໜ່ງໃດໜຶ່ງ ໃນວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ຫົວໜ່ວຍຖືບັນຊີອື່ນ;
3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 (ປັບປຸງ) ພັນທະ ແລະ ຄວາມຮັບຜິດຊອບ ຂອງນັກຊ່ຽວຊານບັນຊີ**

ນັກຊ່ຽວຊານບັນຊີ ມີ ພັນທະ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດຕາມກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການບັນຊີ ແລະ ຈັນຍາບັນດ້ານວິຊາຊີບການບັນຊີ;
2. ເຄື່ອນໄຫວດ້ານວິຊາຊີບ ຢ່າງຖືກຕ້ອງ, ພາວະວິໄສ ແລະ ຮັບປະກັນຄວາມເປັນມືອາຊີບ;
3. ເປັນສະມາຊິກສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;

4. ຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ລູກຄ້າ ກ່ຽວກັບຄວາມເສຍຫາຍທີ່ເກີດຂຶ້ນ ຈາກການໃຫ້ບໍລິການຂອງຕົນ;

5. ລາຍງານຕໍ່ອົງການຄຸ້ມຄອງວຽກງານກວດສອບອິດສະລະ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ ໃນກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ຈ່າຍຄ່າສະມາຊິກ ໃຫ້ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ຢ່າງເປັນປົກກະຕິ;

7. ເຂົ້າຮ່ວມການຍົກລະດັບວິຊາຊີບແບບຕໍ່ເນື່ອງ ຢ່າງໜ້ອຍ ສີ່ສິບຊົ່ວໂມງ ຕໍ່ປີ;

8. ມີພັນທະ ແລະ ຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 2
## ການໂຈະ ແລະ ການຖອນ ໃບອະນຸຍາດປະກອບອາຊີບ ຂອງນັກຊ່ຽວຊານບັນຊີ

### ມາດຕາ 41 (ໃໝ່) ການໂຈະ ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ

ນັກຊ່ຽວຊານບັນຊີ ຈະຖືກໂຈະໃບອະນຸຍາດປະກອບອາຊີບ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປະຕິບັດພັນທະຄ່າສະມາຊິກ ໃຫ້ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
2. ບໍ່ເຂົ້າຮ່ວມການຝຶກອົບຮົມແບບຕໍ່ເນື່ອງ;
3. ເອົາໃບຢັ້ງຢືນນັກຊ່ຽວຊານບັນຊີ ໃຫ້ຜູ້ອື່ນນໍາໃຊ້;
4. ເຮັດວຽກໃຫ້ຫຼາຍວິສາຫະກິດໃນໄລຍະເວລາດຽວກັນ;
5. ເຄື່ອນໄຫວບໍ່ຖືກຕ້ອງຕາມມາດຕະຖານວິຊາຊີບດ້ານການກວດສອບ.

ກະຊວງການເງິນ ໂຈະໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ ພາຍຫຼັງໄດ້ມີການກ່າວເຕືອນເປັນລາຍລັກອັກສອນ, ຍົກເວັ້ນ ໃນກໍລະນີທີ່ໄດ້ກໍານົດໄວ້ໃນ ຂໍ້ 3 ແລະ ຂໍ້ 4 ຂອງມາດຕານີ້ ຈະຖືກໂຈະໂດຍບໍ່ມີການກ່າວເຕືອນ. ການໂຈະດັ່ງກ່າວຈະຖືກຍົກເລີກ ກໍຕໍ່ເມື່ອນັກຊ່ຽວຊານບັນຊີ ມີການປັບປຸງ ແລະ ແກ້ໄຂ ສໍາເລັດຕາມເວລາທີ່ໄດ້ກໍານົດໄວ້.

### ມາດຕາ 42 (ໃໝ່) ການຖອນໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ

ນັກຊ່ຽວຊານບັນຊີ ຈະຖືກຖອນໃບອະນຸຍາດປະກອບອາຊີບ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເຄື່ອນໄຫວວິຊາຊີບ ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ;
2. ບໍ່ປັບປຸງ ແລະ ບໍ່ແກ້ໄຂ ຕາມການແຈ້ງໂຈະຂອງກະຊວງການເງິນ;
3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທໍາຜິດ ກ່ຽວກັບວຽກງານບັນຊີ ແລະ ກວດສອບ ຫຼື ການກະທໍາຜິດອື່ນ ໂດຍເຈດຕະນາ;
4. ຕາມການສະເໜີຂອງຜູ້ກ່ຽວເອງ.

ກະຊວງການເງິນ ພິຈາລະນາຖອນໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ ພ້ອມທັງເປີດເຜີຍຕໍ່ສາທາລະນະຊົນ ໂດຍຜ່ານພາຫະນະສື່ມວນຊົນ.

# ພາກທີ IV
# ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ
## ໝວດທີ 1
## ການສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

**ມາດຕາ 43 (ປັບປຸງ) ການສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຢູ່ ສປປ ລາວ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ໃຫ້ຂໍອະນຸຍາດດຳເນີນທຸລະກິດທາງດ້ານການບັນຊີ ແລະ ການກວດສອບ ນຳກະຊວງການເງິນ.

**ມາດຕາ 44 (ປັບປຸງ) ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດທາງດ້ານການບັນຊີ ແລະ ການກວດສອບ**

ການຂໍອະນຸຍາດດຳເນີນທຸລະກິດທາງດ້ານການບັນຊີ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ເປັນນັກຊ່ຽວຊານບັນຊີ ແລະ ໄດ້ຮັບໃບອະນຸຍາດປະກອບອາຊີບ ຂອງນັກຊ່ຽວຊານບັນຊີ ແລະ ຖືຮຸ້ນ ຫ້າສິບເອັດສ່ວນຮ້ອຍ ຂຶ້ນໄປ;
3. ເປັນສະມາຊິກສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
4. ບໍ່ເປັນ ເຈົ້າຂອງ, ຜູ້ຖືຮຸ້ນ, ຂາຮຸ້ນ ແລະ ພະນັກງານ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບໃດໜຶ່ງ;
5. ມີພະນັກງານວິຊາການທີ່ມີວິຊາສະເພາະດ້ານການບັນຊີ, ການເງິນ ແຕ່ ສາມຄົນ ຂຶ້ນໄປ;
6. ມີທຶນຈົດທະບຽນ 300,000,000 (ສາມຮ້ອຍລ້ານ) ກີບ ຂຶ້ນໄປ.

ການຂໍອະນຸຍາດດຳເນີນທຸລະກິດທາງດ້ານການກວດສອບ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ເປັນນັກຊ່ຽວຊານບັນຊີ ແລະ ໄດ້ຮັບໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ ຫຼື ວິສາຫະກິດກວດສອບຕ່າງປະເທດ;
3. ເປັນສະມາຊິກສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
4. ບໍ່ເປັນ ເຈົ້າຂອງ, ຜູ້ຖືຮຸ້ນ, ຂາຮຸ້ນ ແລະ ພະນັກງານ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບໃດໜຶ່ງ;
5. ມີ ສາມສ່ວນຫ້າ ຂອງຜູ້ຖືຮຸ້ນທັງໝົດ ເປັນນັກຊ່ຽວຊານບັນຊີ ແລະ ເປັນຜູ້ບໍລິຫານ. ສຳລັບວິສາຫະກິດກວດສອບຕ່າງປະເທດ ຜູ້ຮຸ້ນສ່ວນຮັບຜິດຊອບງານ ຕ້ອງເປັນຄົນລາວ ຢ່າງໜ້ອຍ ໜຶ່ງຄົນ;
6. ມີທຶນຈົດທະບຽນ 1,000,000,000 (ໜຶ່ງຕື້) ກີບ ຂຶ້ນໄປ;
7. ມີນັກຊ່ຽວຊານບັນຊີ ຢ່າງໜ້ອຍ ສອງຄົນ ແລະ ພະນັກງານວິຊາການທີ່ມີວິຊາສະເພາະດ້ານການບັນຊີ, ການເງິນ ແຕ່ ສາມຄົນ ຂຶ້ນໄປ.

ສຳລັບວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ສ້າງຕັ້ງຂຶ້ນກ່ອນກົດໝາຍສະບັບນີ້ ຕ້ອງເພີ່ມທຶນຈົດທະບຽນ ໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໃນ ວັກທີໜຶ່ງ ຂໍ້ 6 ແລະ ວັກທີສອງ ຂໍ້ 6 ຂອງມາດຕານີ້ ພາຍໃນເວລາ ສາມປີ ນັບແຕ່ວັນທີ່ກົດໝາຍສະບັບນີ້ ມີຜົນສັກສິດ.

ສຳລັບວິສາຫະກິດກວດສອບຕ່າງປະເທດ ຕ້ອງໃຫ້ມີຮຸ້ນສ່ວນຮັບຜິດຊອບງານ ທີ່ເປັນຄົນລາວ ຢ່າງໜ້ອຍ ໜຶ່ງຄົນ ຕາມທີ່ໄດ້ກຳນົດໃນ ວັກທີສອງ ຂອງມາດຕານີ້ ພາຍໃນເວລາ ສີ່ປີ ນັບແຕ່ວັນທີ່ກົດໝາຍສະບັບນີ້ ມີຜົນສັກສິດ.

**ມາດຕາ 45 (ໃໝ່) ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ**

ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດທາງດ້ານການບັນຊີ ແລະ ການກວດສອບ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ກະຊວງການເງິນກຳນົດ;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ;
4. ສຳເນົາ ໃບຢັ້ງຢືນເປັນສະມາຊິກສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
5. ໃບຢັ້ງຢືນທີ່ຕັ້ງສຳນັກງານ;
6. ກົດລະບຽບພາຍໃນຂອງວິສາຫະກິດ;
7. ເອກະສານອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 46 (ປັບປຸງ) ການອອກໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ**

ກະຊວງການເງິນ ອອກໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນເຫັນວ່າ ມີເງື່ອນໄຂ, ປະກອບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ກະຊວງການເງິນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

ພາຍຫຼັງໄດ້ຮັບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບແລ້ວ ຕ້ອງຂຶ້ນທະບຽນເປັນສະມາຊິກຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ.

ໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ອອກໃຫ້ເທື່ອດຽວຕະຫຼອດໄລຍະການດຳເນີນທຸລະກິດ.

**ມາດຕາ 47 (ປັບປຸງ) ການສ້າງຕັ້ງສາຂາ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ໄດ້ຮັບອະນຸຍາດຈາກກະຊວງການເງິນ.

**ມາດຕາ 48 (ປັບປຸງ) ການໂຈະການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຈະຖືກໂຈະການເຄື່ອນໄຫວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
2. ບໍ່ລາຍງານ ກ່ຽວກັບການເຄື່ອນໄຫວວິສາຫະກິດຂອງຕົນ ຕໍ່ ກະຊວງການເງິນ ເປັນເວລາ ສອງປີຕິດຕໍ່ກັນ;
3. ບໍ່ມີໃບຢັ້ງຢືນການມອບພັນທະສ່ວຍສາອາກອນປະຈຳປີ;
4. ບໍ່ມີໃບຕິດຕາມການຖືບັນຊີ;
5. ບໍ່ປະຕິບັດພັນທະຕໍ່ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;

6. ຖືກດຳເນີນຄະດີ ກ່ຽວກັບການເຄື່ອນໄຫວວິຊາຊີບ ການບັນຊີ ແລະ ການກວດສອບ.

ກະຊວງການເງິນ ໂຈະການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພາຍຫຼັງໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ແຕ່ບໍ່ໄດ້ປັບປຸງ ແລະ ແກ້ໄຂ ສຳເລັດ ຕາມກຳນົດເວລາ, ຍົກເວັ້ນກໍລະນີ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້ ຈະຖືກໂຈະໂດຍບໍ່ມີການກ່າວເຕືອນ. ການໂຈະດັ່ງກ່າວ ຈະຖືກຍົກເລີກ ກໍຕໍ່ເມື່ອ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ມີການປັບປຸງ ແລະ ແກ້ໄຂ ສຳເລັດຕາມເວລາທີ່ໄດ້ກຳນົດໄວ້.

**ມາດຕາ 49 (ປັບປຸງ) ການຖອນໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ**

ໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ຈະຖືກຖອນ ໃນກໍລະນີໃດໜຶ່ງດັ່ງນີ້:

1. ຕາມການສະເໜີ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;
2. ບໍ່ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະຂອງກະຊວງການເງິນ;
3. ຂາຍ, ມອບ, ໂອນ ຫຼື ເອົາໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບໃຫ້ຜູ້ອື່ນນຳໃຊ້;
4. ປະຕິບັດບໍ່ຖືກຕ້ອງຕາມເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍສະບັບນີ້;
5. ສືບຕໍ່ດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ໃນໄລຍະເວລາຖືກສັ່ງໂຈະ;
6. ເຄື່ອນໄຫວດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ບໍ່ຖືກຕ້ອງຕາມກົດໝາຍຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ;
7. ມີຄຳຕັດສິນຂອງສານ ໃຫ້ຢຸດເຊົາການດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ.

ກະຊວງການເງິນ ແຈ້ງເປັນລາຍລັກອັກສອນ ກ່ຽວກັບການຖອນໃບອະນຸຍາດດຳເນີນທຸລະກິດທາງດ້ານການບັນຊີ ແລະ ການກວດສອບ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ,ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ, ຂະແໜງສ່ວຍສາອາກອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຮັບຊາບພ້ອມທັງເປີດເຜີຍຕໍ່ສາທາລະນະຊົນ ໂດຍຜ່ານພາຫະນະສື່ມວນຊົນ.

ໃນກໍລະນີ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຖືກຖອນໃບອະນຸຍາດດຳເນີນທຸລະກິດສາຂາຂອງວິສາຫະກິດນັ້ນ ກໍຖືກຖອນໃບອະນຸຍາດ ຄືກັນ.

## ໝວດທີ 2
## ການເຄື່ອນໄຫວຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

**ມາດຕາ 50 (ປັບປຸງ) ຂອບເຂດການເຄື່ອນໄຫວຂອງວິສາຫະກິດບັນຊີ**

ວິສາຫະກິດບັນຊີ ເຄື່ອນໄຫວໃຫ້ການບໍລິການ ຕາມຂອບເຂດ ດັ່ງນີ້:

1. ຖືບັນຊີໃຫ້ຫົວໜ່ວຍຖືບັນຊີ;
2. ໃຫ້ຄຳປຶກສາດ້ານການບັນຊີ, ກົດໝາຍ ແລະ ລະບຽບການກ່ຽວກັບການບັນຊີ;
3. ໃຫ້ຄຳປຶກສາດ້ານການບໍລິຫານຄຸ້ມຄອງ;
4. ຈັດຝຶກອົບຮົມໄລຍະສັ້ນ ກ່ຽວກັບວຽກງານບັນຊີ;
5. ໃຫ້ການບໍລິການອື່ນກ່ຽວກັບວຽກງານບັນຊີ.

**ມາດຕາ 51 (ປັບປຸງ) ຂອບເຂດການເຄື່ອນໄຫວຂອງວິສາຫະກິດກວດສອບ**

ວິສາຫະກິດກວດສອບ ເຄື່ອນໄຫວໃຫ້ການບໍລິການ ຕາມຂອບເຂດ ດັ່ງນີ້:

1. ກວດສອບເອກະສານລາຍງານການເງິນ;
2. ທົບທວນຄືນເອກະສານລາຍງານການເງິນ;
3. ປະເມີນ ຂໍ້ມູນ ຂ່າວສານ ການເງິນ ແລະ ຂໍ້ມູນ ຂ່າວສານ ທີ່ບໍ່ແມ່ນການເງິນ;
4. ໃຫ້ການບໍລິການວຽກງານບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້;
5. ໃຫ້ການບໍລິການອື່ນກ່ຽວກັບວຽກງານກວດສອບ.

## ໝວດທີ 3
## ສິດ ແລະ ພັນທະ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

**ມາດຕາ 52 (ປັບປຸງ) ສິດ ແລະ ພັນທະ ຂອງວິສາຫະກິດບັນຊີ**

ວິສາຫະກິດບັນຊີ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ບໍລິການວຽກງານບັນຊີ ຕໍ່ຫົວໜ່ວຍຖືບັນຊີ ຢ່າງຖືກຕ້ອງຕາມກົດໝາຍ;
2. ຮັບຄ່າບໍລິການດ້ານວິຊາຊີບຈາກລູກຄ້າ;
3. ປະຕິບັດຈັນຍາບັນດ້ານວິຊາຊີບການບັນຊີ;
4. ຮັກສາຄວາມລັບດ້ານວິຊາຊີບ;
5. ລາຍງານການປ່ຽນ ຜູ້ອຳນວຍການ, ຜູ້ຈັດການ, ຜູ້ຖືຮຸ້ນ ແລະ ຂາຮຸ້ນ ຂອງຕົນຕໍ່ກະຊວງການເງິນ ເພື່ອພິຈາລະນາ;
6. ໃຫ້ຄວາມຮ່ວມມື ກັບເຈົ້າໜ້າທີ່ບັນຊີ ຫຼື ພະນັກງານຂອງລັດ ທີ່ກ່ຽວຂ້ອງ;
7. ຍົກລະດັບການສຶກສາດ້ານວິຊາຊີບ ໃຫ້ແກ່ພະນັກງານໃນວິສາຫະກິດ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ;
8. ປະຕິບັດພັນທະຕໍ່ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
9. ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຄວາມເສຍຫາຍທີ່ເກີດຂຶ້ນຈາກການໃຫ້ບໍລິການຂອງຕົນ;
10. ປະກອບສ່ວນໃນການພັດທະນາວິຊາຊີບການບັນຊີ ແລະ ການກວດສອບ ໃນ ສປປ ລາວ;
11. ລາຍງານຕໍ່ອົງການຄຸ້ມຄອງວຽກງານກວດສອບອິດສະລະ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ໃນກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປະຈຳປີ ຂອງຕົນ ຕໍ່ ກະຊວງການເງິນ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
13. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 (ປັບປຸງ) ສິດ ແລະ ພັນທະ ຂອງວິສາຫະກິດກວດສອບ**

ວິສາຫະກິດກວດສອບ ນອກຈາກ ມີ ສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້ແລ້ວ ຍັງມີ ສິດ ແລະ ພັນທະ ດັ່ງນີ້:

1. ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງການເຄື່ອນໄຫວ, ຂໍ້ມູນ, ເອກະສານ ການເງິນ ແລະ ການບັນຊີ ທັງພາຍໃນ ແລະ ພາຍນອກ ໃນໄລຍະການດຳເນີນການກວດສອບ ແລະ ລົງລາຍເຊັນໃສ່ບົດລາຍງານຜົນການກວດສອບ;
2. ເປັນເຄືອຂ່າຍວິຊາຊີບກວດສອບໃດໜຶ່ງ;
3. ສະເໜີໃຫ້ເປົ້າໝາຍຖືກກວດສອບ, ບຸກຄົນ ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບການກວດສອບ;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການກວດສອບ;

5. ເປັນຜູ້ຮ່ວມງານກວດສອບ ກັບ ອົງການກວດສອບແຫ່ງລັດ;

6. ມີຄວາມເປັນເອກະລາດ ໃນການດຳເນີນການກວດສອບ;

7. ເຮັດສັນຍາປະກັນໄພຄ່າເສຍຫາຍດ້ານວິຊາຊີບ;

8. ມີລະບົບການຮັບປະກັນຄຸນນະພາບ ໂດຍສອດຄ່ອງກັບມາດຕະຖານວິຊາຊີບດ້ານການກວດສອບ;

9. ລາຍງານຄ່າບໍລິການກວດສອບ ແລະ ການບໍລິການອື່ນກ່ຽວກັບການກວດສອບ ໃນເວລາດຳເນີນການກວດສອບ ຕໍ່ກະຊວງການເງິນ;

10. ລາຍງານຜົນການກວດສອບ ຫຼື ເອກະສານລາຍງານການເງິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານວິຊາຊີບດ້ານການກວດສອບ ແລະ ມາດຕະຖານການລາຍງານການເງິນ.

## ພາກທີ V
## ນັກກວດສອບຕາມກົດໝາຍ

### ມາດຕາ 54 (ປັບປຸງ) ເງື່ອນໄຂຂອງນັກກວດສອບຕາມກົດໝາຍ

ບຸກຄົນ ທີ່ຈະເປັນນັກກວດສອບຕາມກົດໝາຍ ຕ້ອງເປັນນັກຊ່ຽວຊານບັນຊີ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້ ແລະ ເປັນ ຜູ້ອຳນວຍການ, ຜູ້ຈັດການ, ຮອງຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານຂອງວິສາຫະກິດກວດສອບ.

### ມາດຕາ 55 (ປັບປຸງ) ເອກະສານປະກອບຂໍອະນຸຍາດເປັນນັກກວດສອບຕາມກົດໝາຍ

ເອກະສານປະກອບຂໍອະນຸຍາດເປັນນັກກວດສອບຕາມກົດໝາຍ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ກະຊວງການເງິນກຳນົດ;

2. ສຳເນົາ ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ;

3. ສຳເນົາ ໃບຢັ້ງຢືນເປັນສະມາຊິກຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

4. ໜັງສືຢັ້ງຢືນເປັນ ຜູ້ອຳນວຍການ, ຜູ້ຈັດການ, ຮອງຜູ້ອຳນວຍການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານຈາກວິສາຫະກິດກວດສອບ ທີ່ຕົນສັງກັດຢູ່;

5. ສຳເນົາໃບອະນຸຍາດດຳເນີນທຸລະກິດຂອງວິສາຫະກິດກວດສອບ ທີ່ຕົນສັງກັດຢູ່;

6. ເອກະສານອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 56 (ປັບປຸງ) ການອະນຸຍາດເປັນນັກກວດສອບຕາມກົດໝາຍ

ກະຊວງການເງິນ ອະນຸຍາດເປັນນັກກວດສອບຕາມກົດໝາຍ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນເຫັນວ່າ ມີເງື່ອນໄຂ, ປະກອບເອກະສານ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີບໍ່ສາມາດອະນຸຍາດເປັນນັກກວດສອບຕາມກົດໝາຍໄດ້ ກະຊວງການເງິນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນເວລາດັ່ງກ່າວ.

### ມາດຕາ 57 (ປັບປຸງ) ການໂຈະການເປັນນັກກວດສອບຕາມກົດໝາຍ

ນັກກວດສອບຕາມກົດໝາຍ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ວິສາຫະກິດກວດສອບທີ່ຕົນສັງກັດ ຫາກຖືກໂຈະການເຄື່ອນໄຫວ;

2. ການໂຈະໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ;

3. ການເອົາໃບອະນຸຍາດນັກກວດສອບຕາມກົດໝາຍ ໃຫ້ຜູ້ອື່ນນຳໃຊ້;

4. ການເຄື່ອນໄຫວການກວດສອບ ບໍ່ຖືກຕ້ອງ.

ການໂຈະ ຈະຖືກຍົກເລີກກໍຕໍ່ເມື່ອ ວິສາຫະກິດກວດສອບທີ່ຕົນສັງກັດ ຫຼື ນັກກວດສອບຕາມກົດໝາຍ ມີການປັບປຸງ ແລະ ແກ້ໄຂ ສຳເລັດ ຕາມເວລາທີ່ໄດ້ກຳນົດໄວ້.

**ມາດຕາ 58 (ປັບປຸງ) ການຖອນໃບອະນຸຍາດເປັນນັກກວດສອບຕາມກົດໝາຍ**

ນັກກວດສອບຕາມກົດໝາຍ ຈະຖືກຖອນໃບອະນຸຍາດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ວິສາຫະກິດກວດສອບທີ່ຕົນສັງກັດ ຫາກຖືກຖອນໃບອະນຸຍາດດຳເນີນທຸລະກິດ;
2. ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ ຖືກຖອນ;
3. ການສະເໜີຂອງນັກກວດສອບຕາມກົດໝາຍ ຫຼື ວິສາຫະກິດກວດສອບທີ່ຕົນສັງກັດ;
4. ການເຄື່ອນໄຫວວິຊາຊີບ ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ;
5. ການບໍ່ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະຂອງກະຊວງການເງິນ;
6. ສານຕັດສິນລົງໂທດຕັດອິດສະລະພາບຜູ້ກ່ຽວ ຍ້ອນການກະທຳຜິດ ກ່ຽວກັບວຽກງານບັນຊີ ແລະ ກວດສອບ ແລະ ການກະທຳຜິດອື່ນ ໂດຍເຈດຕະນາ.

ກະຊວງການເງິນ ແຈ້ງເປັນລາຍລັກອັກສອນໃຫ້ນັກກວດສອບຕາມກົດໝາຍ, ວິສາຫະກິດກວດສອບ, ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ເປີດເຜີຍຕໍ່ສາທາລະນະຊົນ ໂດຍຜ່ານພາຫະນະສື່ມວນຊົນ ພາຍຫຼັງຖືກຖອນໃບອະນຸຍາດ.

**ມາດຕາ 59 (ປັບປຸງ) ສິດ ແລະ ພັນທະ ຂອງນັກກວດສອບຕາມກົດໝາຍ**

ນັກກວດສອບຕາມກົດໝາຍ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນການກວດສອບ ເປົ້າໝາຍຖືກກວດສອບຕາມກົດໝາຍ ຕະຫຼອດປີການບັນຊີ;
2. ເຂົ້າເຖິງ ຂໍ້ມູນ ຂ່າວສານ ທັງໝົດກ່ຽວກັບການກວດສອບ ຂອງເປົ້າໝາຍຖືກກວດສອບ ລວມທັງ ບໍລິສັດໃນກຸ່ມ;
3. ສະເໜີໃຫ້ ຄະນະຜູ້ບໍລິຫານ, ຜູ້ຈັດການ, ພະນັກງານ ຫຼື ຄູ່ສັນຍາ ຂອງເປົ້າໝາຍຖືກກວດສອບ ອະທິບາຍ ຊີ້ແຈງ ສິ່ງຈຳເປັນເພີ່ມເຕີມ;
4. ນຳໃຊ້ນັກຊ່ຽວຊານສະເພາະດ້ານໃດໜຶ່ງ ແລະ ພະນັກງານວິຊາການ ໃຫ້ການຊ່ວຍເຫຼືອ ຫຼື ເປັນຕົວແທນ ເພື່ອດຳເນີນການກວດສອບ ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
5. ກວດກາເອກະສານທາງດ້ານບັນຊີ, ຄວາມຖືກຕ້ອງ, ຄົບຖ້ວນ ແລະ ການປະເມີນອົງປະກອບ ຂອງເອກະສານລາຍງານການເງິນຂອງເປົ້າໝາຍຖືກກວດສອບຕາມກົດໝາຍ;
6. ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນບົດລາຍງານຜົນການກວດສອບ, ເອກະສານລາຍງານ ການເງິນປະຈຳປີ ລວມກິດຈະການ ແລະ ສະເພາະກິດຈະການ ຂອງກຸ່ມບໍລິສັດ;
7. ລາຍງານຕໍ່ອົງການຄຸ້ມຄອງວຽກງານກວດສອບອິດສະລະ ແລະ ສຳນັກງານຂໍ້ມູນຕ້ານການ ຟອກເງິນ ໃນກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການ ກໍ່ການຮ້າຍ;
8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VI
# ເປົ້າໝາຍຖືກກວດສອບ

### ມາດຕາ 60 ເປົ້າໝາຍຖືກກວດສອບ

ເປົ້າໝາຍຖືກກວດສອບ ມີ ດັ່ງນີ້:

1. ເປົ້າໝາຍຖືກກວດສອບຕາມກົດໝາຍ;
2. ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ.

### ມາດຕາ 61 (ປັບປຸງ) ເປົ້າໝາຍຖືກກວດສອບຕາມກົດໝາຍ

ເປົ້າໝາຍຖືກກວດສອບຕາມກົດໝາຍ ແມ່ນ ຫົວໜ່ວຍ ແລະ ການຈັດຕັ້ງ ຊຶ່ງເອກະສານລາຍງານການເງິນປະຈຳປີຂອງຕົນ ຕ້ອງໄດ້ຮັບການກວດສອບ ຈາກວິສາຫະກິດກວດສອບ ບົນພື້ນຖານສັນຍາ ດັ່ງນີ້:

1. ວິສາຫະກິດລົງທຶນ ພາຍໃນ ແລະ ຕ່າງປະເທດ ຂະໜາດໃຫຍ່;
2. ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນອື່ນທີ່ບໍ່ແມ່ນທະນາຄານ ຕາມການກຳນົດຂອງທະນາຄານ ແຫ່ງ ສປປ ລາວ;
3. ບໍລິສັດປະກັນໄພ;
4. ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ບໍລິສັດມະຫາຊົນ;
5. ວິສາຫະກິດລັດລົງທຶນ;
6. ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
7. ວິສາຫະກິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 62 (ປັບປຸງ) ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ

ເປົ້າໝາຍຖືກກວດສອບຕາມຄວາມສະໝັກໃຈ ແມ່ນ ຫົວໜ່ວຍ ແລະ ການຈັດຕັ້ງ ທີ່ບໍ່ຖືກບັງຄັບໃຫ້ມີການກວດສອບ ແຕ່ມີຈຸດປະສົງກວດສອບເອກະສານລາຍງານການເງິນຂອງຕົນ ບົນພື້ນຖານສັນຍາກັບວິສາຫະກິດກວດສອບ.

### ມາດຕາ 63 ສິດ ຂອງເປົ້າໝາຍຖືກກວດສອບ

ເປົ້າໝາຍຖືກກວດສອບ ມີສິດ ດັ່ງນີ້:

1. ຄັດເລືອກ ແລະ ຕົກລົງຮັບເອົາວິສາຫະກິດກວດສອບໜຶ່ງ ຫຼື ຫຼາຍວິສາຫະກິດ ເພື່ອກວດສອບເອກະສານລາຍງານການເງິນຂອງຕົນ;
2. ສະເໜີ ໃຫ້ວິສາຫະກິດກວດສອບ ສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນ ກ່ຽວກັບວິສາຫະກິດ ແລະ ນັກກວດສອບຕາມກົດໝາຍ;
3. ສະເໜີ ໃຫ້ປ່ຽນ ສະມາຊິກໃນຄະນະກວດສອບ ຫຼື ນັກກວດສອບຕາມກົດໝາຍ ໃນກໍລະນີບໍ່ສາມາດດຳເນີນວຽກງານກວດສອບ ຫຼື ລະເມີດກົດໝາຍສະບັບນີ້;
4. ປະຕິເສດການສະໜອງ ຂໍ້ມູນ ຂ່າວສານ ທີ່ບໍ່ກ່ຽວຂ້ອງກັບການກວດສອບອີກສະລະ;
5. ປຶກສາຫາລື, ອະທິບາຍ ຢ່າງເປັນລາຍລັກອັກສອນ ກ່ຽວກັບປະເດັນທີ່ໄດ້ຍົກຂຶ້ນໃນຮ່າງບົດລາຍງານຜົນການກວດສອບ ຕາມຄວາມເໝາະສົມ;
6. ທວງໃຫ້ວິສາຫະກິດກວດສອບ ຈ່າຍທົດແທນຄ່າເສຍຫາຍ ໃນກໍລະນີຜູ້ກວດສອບລະເມີດສັນຍາ ຫຼື ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ທີ່ສ້າງຜົນເສຍຫາຍໃຫ້ແກ່ຕົນ;

7. ສະເໜີສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ກະຊວງການເງິນ ໃນກໍລະນີ ມີຄວາມເຫັນທີ່ບໍ່ເປັນເອກະພາບກ່ຽວກັບການສະຫຼຸບ ແລະ ການໃຫ້ຄຳເຫັນຂອງນັກກວດສອບ ຕາມກົດໝາຍ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 64 (ປັບປຸງ) ພັນທະ ຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີພັນທະ ດັ່ງນີ້:

1. ປະຕິບັດຕາມເນື້ອໃນຂອງສັນຍາກວດສອບຢ່າງເຂັ້ມງວດ;
2. ສະໜອງ ຂໍ້ມູນ ຂ່າວສານ ຢ່າງຖືກຕ້ອງ, ຄົບຖ້ວນ, ມີຈິງ, ທັນການ ຕາມການສະເໜີຂອງນັກກວດສອບຕາມກົດໝາຍ ແລະ ສະມາຊິກໃນຄະນະກວດສອບ;
3. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ຄະນະກວດສອບ ສາມາດດຳເນີນວຽກງານກວດສອບອິດສະລະ;
4. ປັບປຸງ, ແກ້ໄຂ ຂໍ້ຄົງຄ້າງ ແລະ ຂໍ້ຜິດພາດ ໃນເອກະສານລາຍງານການເງິນ ໃຫ້ຖືກຕ້ອງຕາມການແນະນຳຂອງວິສາຫະກິດກວດສອບ;
5. ສົ່ງບົດລາຍງານຜົນການກວດສອບ ໃຫ້ອົງການທີ່ກ່ຽວຂ້ອງ ຕາມກົດໝາຍ;
6. ຊຳລະຄ່າບໍລິການກວດສອບ ໃຫ້ຖືກຕ້ອງຕາມສັນຍາ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ການລາຍງານ ແລະ ການຮັກສາຂໍ້ມູນ

**ມາດຕາ 65 (ປັບປຸງ) ການລາຍງານ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງລາຍງານຜົນການດຳເນີນງານຂອງຕົນຕໍ່ ກະຊວງການເງິນ ຢ່າງເປັນປົກກະຕິ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນປິດບັນຊີປະຈຳປີ.

ການລາຍງານ ປະກອບດ້ວຍເອກະສານ ດັ່ງນີ້:

1. ຜົນການເຄື່ອນໄຫວປະຈຳປີ, ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ແລະ ສະຖິຕິລູກຄ້າລວມທັງຄ່າບໍລິການ;
2. ເອກະສານລາຍງານການເງິນປະຈຳປີ;
3. ເອກະສານຢັ້ງຢືນການຍົກລະດັບການສຶກສາດ້ານວິຊາຊີບ ໃຫ້ພະນັກງານໃນວິສາຫະກິດຂອງຕົນ;
4. ໃບຕິດຕາມການຖືບັນຊີປະຈຳປີ;
5. ໃບຢັ້ງຢືນການມອບພັນທະສ່ວຍສາອາກອນປະຈຳປີ;
6. ໃບຢັ້ງຢືນການປະຕິບັດພັນທະຕໍ່ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
7. ບົດລາຍງານຄວາມໂປ່ງໃສ;
8. ລາຍງານຂໍ້ມູນ ກ່ຽວກັບ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
9. ສັນຍາປະກັນໄພຄ່າເສຍຫາຍດ້ານວິຊາຊີບການກວດສອບ;
10. ເອກະສານອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 66 (ປັບປຸງ) ການຮັກສາຂໍ້ມູນ**

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານທີ່ສໍາຄັນ ກ່ຽວກັບວຽກງານບັນຊີ, ກວດສອບອິດສະລະ ແລະ ວຽກງານອື່ນ ທີ່ຕິດພັນກັບການກວດສອບໄວ້ເປັນຢ່າງດີ ຢ່າງໜ້ອຍເປັນເວລາ ສິບປີ. ໃນກໍລະນີຂໍ້ມູນ ແລະ ເອກະສານ ດັ່ງກ່າວ ພົວພັນກັບສັນຍາໃດໜຶ່ງ ຕ້ອງຮັກສາໄວ້ຕື່ມອີກສິບປີ ພາຍຫຼັງສັນຍາໄດ້ສິ້ນສຸດລົງ.

ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ຕ້ອງກໍານົດລະບຽບການ ແລະ ວິທີການທີ່ຈໍາເປັນໃຫ້ສອດຄ່ອງກັບກົດໝາຍ ແລະ ມາດຕະຖານວິຊາຊີບດ້ານການກວດສອບ ເພື່ອເກັບຮັກສາຂໍ້ມູນ ແລະ ເອກະສານທີ່ຕິດພັນກັບການກວດສອບ ໃຫ້ປອດໄພ, ຄົບຖ້ວນ ແລະ ເປັນຄວາມລັບ.

## ພາກທີ VIII
## ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

**ມາດຕາ 67 (ປັບປຸງ) ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ**

ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແມ່ນ ການຈັດຕັ້ງວິຊາຊີບນັກບັນຊີ ແລະ ນັກກວດສອບທີ່ສ້າງຕັ້ງຂຶ້ນ ໂດຍກະຊວງການເງິນ, ມີພາລະບົດບາດ ໃນການປະກອບຄໍາເຫັນໃຫ້ແກ່ລັດ, ປຸກລະດົມຂົນຂວາຍ, ນໍາພາ, ເຕົ້າໂຮມສະມາຊິກ ລວມທັງປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຊ່ວຍວຽກງານຂອງລັດໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

ສໍາລັບ ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ແລະ ກົດລະບຽບຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ**

ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈໍາ ເດືອນ, ໄຕມາດ ແລະ ປີ;
2. ຄົ້ນຄວ້າ, ສ້າງ ລະບຽບການຄຸ້ມຄອງພາຍໃນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
3. ສະເໜີກະຊວງການເງິນ ອອກໃບຢັ້ງຢືນນັກຊ່ຽວຊານບັນຊີ;
4. ອອກໃບຢັ້ງຢືນການສໍາເລັດການຝຶກອົບຮົມວິຊາຊີບຊ່ຽວຊານນັກບັນຊີ ແລະ ການຝຶກງານນັກຊ່ຽວຊານບັນຊີ;
5. ສະເໜີກະຊວງການເງິນ ໂຈະ ຫຼື ຖອນ ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ;
6. ຄົ້ນຄວ້າ ມາດຕະຖານວິຊາຊີບດ້ານການກວດສອບ, ມາດຕະຖານການບັນຊີ, ມາດຕະຖານການລາຍງານການເງິນ, ຈັນຍາບັນດ້ານວິຊາຊີບການບັນຊີ ແລະ ຫຼັກສູດນັກຊ່ຽວຊານບັນຊີ ເພື່ອນໍາສະເໜີກະຊວງການເງິນ ພິຈາລະນາ;
7. ໂຄສະນາ ເຜີຍແຜ່ ມາດຕະຖານວິຊາຊີບດ້ານການກວດສອບ, ມາດຕະຖານການບັນຊີ, ມາດຕະຖານການລາຍງານການເງິນ, ຈັນຍາບັນດ້ານວິຊາຊີບການບັນຊີ ແລະ ລະບຽບການ ກ່ຽວກັບວຽກງານບັນຊີ ແລະ ກວດສອບ;
8. ປະກອບຄໍາເຫັນດ້ານວິຊາການ, ປຸກລະດົມຂົນຂວາຍ, ນໍາພາ, ເຕົ້າໂຮມສະມາຊິກ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມກົດໝາຍ;

9. ຈັດຝຶກອົບຮົມ, ຍົກລະດັບ ຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ການກວດສອບ ຕາມຫຼັກສູດນັກຊ່ຽວຊານບັນຊີ ແລະ ຫຼັກສູດອື່ນທີ່ກ່ຽວຂ້ອງ;

10. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງສະມາຊິກຕົນ;

11. ປະສານສົມທົບ, ປຶກສາຫາລື, ແລກປ່ຽນຄຳເຫັນ ແລະ ຖອດຖອນບົດຮຽນ ກ່ຽວກັບວິຊາຊີບການບັນຊີ ແລະ ການກວດສອບ;

12. ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີ ຂອງບັນດາປະເທດພາກພື້ນ ແລະ ສາກົນ ຕາມການເຫັນດີຂອງກະຊວງການເງິນ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ, ການປະຕິບັດແຜນງົບປະມານ ແລະ ເອກະສານລາຍງານການເງິນປະຈຳປີ ຕໍ່ກະຊວງການເງິນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IX
## ຂໍ້ຫ້າມ

### ມາດຕາ 69 (ປັບປຸງ) ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປັ່ນປ່ວນ ຫຼື ຍຸຍົງ, ໃສ່ຮ້າຍ, ແຊກແຊງ, ກ້າວກ່າຍ, ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືກັບນັກກວດສອບ ແລະ ນັກກວດສອບຕາມກົດໝາຍ ໃນເວລາດຳເນີນການກວດສອບ;

2. ບັງຄັບ, ນາບຂູ່ ນັກກວດສອບ ແລະ ນັກກວດສອບຕາມກົດໝາຍ ຫຼື ປົກປ້ອງເປົ້າໝາຍຖືກກວດສອບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ໃຫ້, ຮັບ ສິນບົນ ແລະ ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ;

4. ໃຫ້ການບໍລິການດ້ານການບັນຊີ ແລະ ການກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

5. ແອບອ້າງຕົນເອງເປັນ ນັກຊ່ຽວຊານບັນຊີ, ນັກກວດສອບ ແລະ ນັກກວດສອບຕາມກົດໝາຍ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 70 (ປັບປຸງ) ຂໍ້ຫ້າມສຳລັບ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ

ຫ້າມ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ມີພຶດຕິກຳ ດັ່ງນີ້:

1. ລະເມີດຈັນຍາບັນດ້ານວິຊາຊີບການບັນຊີ;

2. ມອບ, ໂອນ ຫຼື ເອົາໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ໃຫ້ຜູ້ອື່ນນຳໃຊ້;

3. ປ່ຽນ ຜູ້ອຳນວຍການ, ຜູ້ຈັດການ, ຜູ້ຖືຮຸ້ນ ແລະ ຂາຮຸ້ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ແຕ່ງຕັ້ງນັກກວດສອບຕາມກົດໝາຍ ດຳເນີນການກວດສອບເອກະສານລາຍງານການເງິນປະຈຳປີ ຂອງເປົ້າໝາຍຖືກກວດສອບ ທີ່ຜູ້ກ່ຽວເຄີຍເຮັດວຽກ ແລະ ໄດ້ຢຸດເຊົາໜ້າທີ່ຢູ່ວິສາຫະກິດດັ່ງກ່າວພາຍໃນໄລຍະເວລາ ສາມປີ;

5. ແຕ່ງຕັ້ງນັກກວດສອບຕາມກົດໝາຍ ທີ່ເຄີຍດຳເນີນການກວດສອບເປົ້າໝາຍຖືກກວດສອບເປັນເວລາ ຫ້າປີ ຕິດຕໍ່ກັນ;

6. ປອມແປງຂໍ້ມູນ ແລະ ຫຼັກຖານ ຂອງ ຜູ້ອຳນວຍການ, ຜູ້ຖືຮຸ້ນ, ຜູ້ຈັດການ, ພະນັກງານ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

7. ແຕ່ງຕັ້ງ ພະນັກງານຂອງວິສາຫະກິດບັນຊີ, ວິສາຫະກິດກວດສອບ ແລະ ວິສາຫະກິດອື່ນ ເປັນ ຜູ້ອຳນວຍການ, ຂາຮຸ້ນ ຫຼື ຜູ້ຈັດການ ຫຼື ຜູ້ຮຸ້ນສ່ວນຮັບຜິດຊອບງານ ຂອງວິສາຫະກິດຕົນ;

8. ດຳເນີນການກວດສອບ ວິສາຫະກິດທີ່ຕົນເອງເຄີຍໃຫ້ບໍລິການ ຫຼື ໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບພາຍໃນ ໃນໄລຍະສັນຍາກວດສອບຍັງມີຜົນສັກສິດຢູ່;

9. ລະເມີດ ແລະ ຍົກເລີກ ສັນຍາບໍລິການ ບັນຊີ ແລະ ກວດສອບ ແຕ່ຝ່າຍດຽວ;

10. ພົວພັນກັບລູກຄ້າທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແລະ ເສຍຊື່ສຽງດ້ານວິຊາຊີບ;

11. ຄິດໄລ່ ແລະ ຮັບຄ່າບໍລິການທີ່ບໍ່ສົມສ່ວນກັບຂອບເຂດວຽກງານທີ່ໄດ້ປະຕິບັດ;

12. ທຳລາຍ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ຫຼັກຖານ ແລະ ເອກະສານ ທີ່ຕິດພັນກັບວຽກງານ ບັນຊີ ແລະ ກວດສອບ;

13. ຫຼີກຫຼີກການລາຍງານ ການໃຫ້ບໍລິການດ້ານການບັນຊີ ແລະ ການກວດສອບ ຕໍ່ອົງການຄຸ້ມຄອງວຽກງານກວດສອບອິດສະລະ;

14. ບໍລິການວຽກງານບັນຊີ ແລະ ກວດສອບໃຫ້ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີພຶດຕິກຳພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

15. ບໍລິການດ້ານບັນຊີ ແລະ ກວດສອບ ໃຫ້ວິສາຫະກິດ ທີ່ມີຍາດພີ່ນ້ອງໃກ້ຊິດ ເປັນຫົວໜ້າບັນຊີ ຫຼື ຜູ້ບໍລິຫານຂອງຫົວໜ່ວຍຖືບັນຊີ;

16. ປະຕິເສດການຮ່ວມມື ກັບເຈົ້າໜ້າທີ່ບັນຊີ, ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ;

17. ເປີດເຜີຍຄວາມລັບ ຫຼື ຂໍ້ມູນຂອງຫົວໜ່ວຍຖືບັນຊີ ທີ່ຕົນໄດ້ໃຫ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;

18. ນຳໃຊ້ ຂໍ້ມູນ ຂ່າວສານ ທີ່ໄດ້ຮັບກ່ຽວກັບການປະຕິບັດຂໍ້ຜູກພັນ ໄປໃນທາງທີ່ບໍ່ຖືກຕ້ອງ;

19. ແຕ່ງຕັ້ງບຸກຄົນດຽວກັນ ເປັນຜູ້ຈັດການ ສອງສາຂາ ຂຶ້ນໄປ;

20. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 71 (ປັບປຸງ) ຂໍ້ຫ້າມສຳລັບນັກກວດສອບ**

ຫ້າມ ນັກກວດສອບ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວວຽກງານກວດສອບ ທີ່ກໍ່ໃຫ້ເກີດເສຍຊື່ສຽງດ້ານວິຊາຊີບການບັນຊີ ແລະ ການກວດສອບ;

2. ເຮັດວຽກ ໃຫ້ຫຼາຍວິສາຫະກິດພ້ອມກັນ ສຳລັບຜູ້ມີວຽກປະຈຳບ່ອນໃດໜຶ່ງແລ້ວ ຫຼື ໃຫ້ບໍລິການວຽກງານບັນຊີ ແລະ ກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຊື້ ຂາຍ ຮຸ້ນ, ພັນທະບັດ ຫຼື ຊັບສິນອື່ນ ຂອງເປົ້າໝາຍຖືກກວດສອບ ໃນໄລຍະເວລາດຳເນີນການກວດສອບ;

4. ສວຍໃຊ້ສິດ, ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

5. ຕົວະຍົວະ, ຫຼອກລວງ, ໂຄສະນາ ຄວາມຮູ້ຄວາມສາມາດ ຫຼື ໃຊ້ວິທີທີ່ບໍ່ເໝາະສົມ ເພື່ອຊອກລູກຄ້າ;

6. ທຳລາຍ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ຫຼັກຖານ ແລະ ເອກະສານ ກ່ຽວກັບການກວດສອບ;

7. ສົມຮູ້ຮ່ວມຄິດ, ປົກປິດ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ຫຼັກຖານ ແລະ ເອກະສານ ທີ່ຕິດພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

8. ເປີດເຜີຍຂໍ້ມູນຂອງເປົ້າໝາຍຖືກກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 72 (ປັບປຸງ) ຂໍ້ຫ້າມສຳລັບນັກຊ່ຽວຊານບັນຊີ**

ຫ້າມ ນັກຊ່ຽວຊານບັນຊີ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວວຽກງານບັນຊີ ແລະ ກວດສອບ ທີ່ກໍ່ໃຫ້ເກີດເສຍຊື່ສຽງດ້ານວິຊາຊີບການບັນຊີ ແລະ ການກວດສອບ;

2. ເຮັດວຽກ ໃຫ້ຫຼາຍວິສາຫະກິດພ້ອມກັນ ສຳລັບຜູ້ມີວຽກປະຈຳບ່ອນໃດໜຶ່ງແລ້ວ ຫຼື ໃຫ້ບໍລິການບັນຊີ ແລະ ກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

3. ໃຫ້ ເຊົ່າ, ຢືມ, ມອບ ໃບຢັ້ງຢືນນັກຊ່ຽວຊານບັນຊີ ໃຫ້ບຸກຄົນອື່ນນຳໃຊ້;

4. ສວຍໃຊ້ ສິດ, ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

5. ທຳລາຍ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ຫຼັກຖານ ແລະ ເອກະສານ ກ່ຽວກັບວຽກງານບັນຊີ ແລະ ກວດສອບ;

6. ສົມຮູ້ຮ່ວມຄິດ, ປົກປິດ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ຫຼັກຖານ ແລະ ເອກະສານ ທີ່ຕິດພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

7. ເປີດເຜີຍຂໍ້ມູນຂອງຫົວໜ່ວຍຖືບັນຊີທີ່ຕົນເອງສັງກັດ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 73 (ປັບປຸງ) ຂໍ້ຫ້າມສຳລັບເປົ້າໝາຍຖືກກວດສອບ**

ຫ້າມ ເປົ້າໝາຍຖືກກວດສອບ ມີພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງ ຫຼື ຮັບເອົາ ນັກກວດສອບ ແລະ ນັກກວດສອບຕາມກົດໝາຍ ທີ່ເຄີຍເຮັດວຽກ ແລະ ໄດ້ຢຸດເຊົາໜ້າທີ່ຢູ່ຫົວໜ່ວຍທີ່ຖືກກວດສອບ ພາຍໃນໄລຍະເວລາ ສາມປີ;

2. ນຳໃຊ້ວິສາຫະກິດທີ່ບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດທາງດ້ານການກວດສອບ ຢູ່ ສປປ ລາວ ເພື່ອກວດສອບເອກະສານລາຍງານການເງິນຂອງຕົນ;

3. ນຳໃຊ້ວິສາຫະກິດກວດສອບ ທີ່ຕົນເອງວ່າຈ້າງໃຫ້ບໍລິການດ້ານ ການບັນຊີ ຫຼື ການກວດສອບພາຍໃນ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ ໃນປີການບັນຊີດຽວກັນ;

4. ກໍ່ຄວາມເສຍຫາຍ ຕໍ່ຄວາມສັກຊື່ ສຸດຈະລິດ ແລະ ຊື່ສຽງ ຂອງນັກຊ່ຽວຊານບັນຊີ ແລະ ນັກກວດສອບ;

5. ລາຍງານ, ສະໜອງຂໍ້ມູນ, ເອກະສານບໍ່ຖືກກັບຄວາມຈິງ ໃຫ້ນັກກວດສອບ;

6. ທຳລາຍ, ປອມແປງ, ຊຸກເຊື່ອງ ຂໍ້ມູນ ແລະ ເອກະສານ ທີ່ເປັນຫຼັກຖານຂອງການກວດສອບ;

7. ຂັດຂວາງ, ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ, ບັງຄັບ, ນາບຂູ່ນັກກວດສອບ ຫຼື ບຸກຄົນທີ່ກ່ຽວຂ້ອງກັບການກວດສອບ;

8. ໃຫ້, ເປັນສື່ກາງໃນການໃຫ້ ສິນບົນ ນັກກວດສອບ ຫຼື ບຸກຄົນ ກ່ຽວກັບການກວດສອບ;

9. ລະເມີດ ແລະ ຍົກເລີກ ສັນຍາກວດສອບ ແຕ່ຝ່າຍດຽວ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາ ວຽກງານກວດສອບອິດສະລະ
## ໝວດທີ 1
## ການຄຸ້ມຄອງວຽກງານກວດສອບອິດສະລະ

**ມາດຕາ 74 (ປັບປຸງ) ອົງການຄຸ້ມຄອງວຽກງານກວດສອບອິດສະລະ**

ລັດຖະບານ ຄຸ້ມຄອງວຽກງານກວດສອບອິດສະລະ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານກວດສອບອິດສະລະ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນ ແຂວງ, ນະຄອນຫຼວງ.

ເພື່ອຮັບປະກັນໃຫ້ວຽກງານກວດສອບອິດສະລະດຳເນີນໄປຢ່າງມີປະສິດທິພາບ ແລະ ປະສິດທິຜົນນັ້ນ ອົງການຄຸ້ມຄອງວຽກງານກວດສອບອິດສະລະ ອາດມອບໃຫ້ຫ້ອງການການເງິນ ເມືອງ, ນະຄອນ ຊ່ວຍໃນການຄຸ້ມຄອງວຽກງານກວດສອບອິດສະລະ ຕາມລະບຽບການ.

**ມາດຕາ 75 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານກວດສອບອິດສະລະ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບວຽກງານກວດສອບອິດສະລະ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ ແລະ ລະບຽບການ ກ່ຽວກັບວຽກງານກວດສອບອິດສະລະ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກວດສອບອິດສະລະ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດສອບອິດສະລະ;
5. ກຳນົດ ແລະ ປະກາດໃຊ້ ມາດຕະຖານວິຊາຊີບດ້ານການກວດສອບ, ຈັນຍາບັນດ້ານວິຊາຊີບການບັນຊີ, ລະບົບຮັບປະກັນຄຸນນະພາບວຽກງານກວດສອບ ແລະ ຫຼັກສູດນັກຊ່ຽວຊານບັນຊີ;
6. ສ້າງ, ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ ເຄື່ອງມືທັນສະໄໝ ກ່ຽວກັບວຽກງານກວດສອບອິດສະລະ;
7. ແຕ່ງຕັ້ງ ແລະ ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການຄະນະບໍລິຫານງານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ຕາມການສະເໜີຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
8. ແຕ່ງຕັ້ງ ແລະ ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການ ຂອງຄະນະກຳມະການຄຸ້ມຄອງນັກຊ່ຽວຊານບັນຊີອາຊຽນ ຂອງ ສປປ ລາວ;
9. ຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວຂອງນັກຊ່ຽວຊານບັນຊີ ແລະ ນັກກວດສອບຕາມກົດໝາຍ;
10. ຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວວິຊາຊີບຂອງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ພ້ອມທັງອອກໃບຕິດຕາມການດຳເນີນທຸລະກິດປະຈຳປີ;
11. ອອກ ໃບຢັ້ງຢືນນັກຊ່ຽວຊານບັນຊີ;
12. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດປະກອບອາຊີບຂອງນັກຊ່ຽວຊານບັນຊີ;

13. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດທາງດ້ານ ການບັນຊີ ແລະ ການກວດສອບ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ, ໃບອະນຸຍາດນັກກວດສອບຕາມກົດໝາຍ;

14. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກວດສອບອິດສະລະ ໃນຂອບເຂດທົ່ວປະເທດ;

15. ຊີ້ນຳ, ຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ຄະນະກຳມະການຄຸ້ມຄອງນັກຊ່ຽວຊານບັນຊີອາຊຽນ ຂອງ ສປປ ລາວ;

16. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບວຽກງານກວດສອບອິດສະລະ;

17. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບ ວຽກງານກວດສອບອິດສະລະ;

18. ຄຸ້ມຄອງ, ຕິດຕາມ ແລະ ລາຍງານການເຄື່ອນໄຫວວຽກງານກວດສອບອິດສະລະ ທີ່ຕິດພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ ອົງການຄຸ້ມຄອງວຽກງານທີ່ກ່ຽວຂ້ອງ;

19. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານກວດສອບອິດສະລະ;

20. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບອິດສະລະ;

21. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດສອບອິດສະລະ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

22. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 76 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກການເງິນ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານກວດສອບອິດສະລະ ພະແນກການເງິນ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານກວດສອບອິດສະລະ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກວດສອບອິດສະລະ;

3. ຕິດຕາມ ການເຄື່ອນໄຫວຂອງນັກຊ່ຽວຊານບັນຊີ, ນັກກວດສອບຕາມກົດໝາຍ, ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ;

4. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກວດສອບອິດສະລະ;

5. ຄຸ້ມຄອງ ແລະ ນຳໃຊ້ ເຄື່ອງມືທັນສະໄໝ ກ່ຽວກັບວຽກງານກວດສອບອິດສະລະ;

6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບ ວຽກງານກວດສອບອິດສະລະ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ກ່ຽວກັບ ວຽກງານກວດສອບອິດສະລະ;

8. ປະສານສົມທົບກັບພະແນກການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດວຽກງານກວດສອບອິດສະລະ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດສອບອິດສະລະ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດສອບອິດສະລະ ຕໍ່ກະຊວງການເງິນ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບກະຊວງການເງິນ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານກວດສອບອິດສະລະ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານກວດສອບອິດສະລະ

**ມາດຕາ 78 (ປັບປຸງ) ອົງການກວດກາວຽກງານກວດສອບອິດສະລະ**

ອົງການກວດກາວຽກງານກວດສອບອິດສະລະ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານກວດສອບອິດສະລະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 79 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານກວດສອບອິດສະລະ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກວດສອບອິດສະລະ;

2. ການເຄື່ອນໄຫວຂອງ ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ນັກຊ່ຽວຊານບັນຊີ, ນັກກວດສອບ ແລະ ນັກກວດສອບຕາມກົດໝາຍ;

3. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານກວດສອບອິດສະລະ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 80 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານກວດສອບອິດສະລະ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານກວດສອບອິດສະລະນັ້ນ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 81 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 82 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 83 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 84 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 31 ມີນາ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**